ແຜນວາດການດຳເນີນຄະດີອາຍາ ຢູ່ ສປປ ລາວ

(ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2017)

Charts of Criminal Procedure in Lao PDR

(Amended Law on Criminal Procedure 2017)

ໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍ
The Project for Promoting Development and Strengthening of the Rule of Law

ໂດຍການຮ່ວມມື ລະຫວ່າງ ອົງການໄອຍະການປະຊາຊົນ, ສານປະຊາຊົນ,
ກະຊວງຍຸຕິທຳ, ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ
ກັບ ອົງການ JICA ປະເທດຍີ່ປຸ່ນ

ປີ 2022

ຄະນະຊີ້ນຳໂຄງການ

1. ທ່ານ ບຸນຂວາງ ທະວີສັກ	ຮອງປະທານສານປະຊາຊົນສູງສຸດ
2. ທ່ານ ຮສ. ປອ. ຮຸ່ງເພັດ ຈັນທະວົງ	ຮອງອະທິການບໍດີມະຫາວິທະຍາໄລ ແຫ່ງຊາດ
3. ທ່ານ ບຸນທັນ ບຸນທະວີໄລ	ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ
4. ທ່ານ ເກດສະໜາ ພົມມະຈັນ	ຮອງລັດຖະມົນຕີກະຊວງຍຸຕິທຳ

ຄະນະບໍລິຫານງານໂຄງການ

1. ທ່ານ ຈັນທະລີ ດວງວິໄລ	ຜູ້ພິພາກສາອາວຸໂສ, ສານປະຊາຊົນສູງສຸດ
2. ທ່ານ ຮສ ວຽງວິໄລ ທ່ຽງຈັນໄຊ	ຄະນະບໍດີ ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລ ແຫ່ງຊາດ
3. ທ່ານ ນະລົງລິດ ນໍລະສິງ	ຫົວໜ້າຫ້ອງການ, ກະຊວງຍຸຕິທຳ
4. ທ່ານ ບົວລີ ເພັດມີໄຊ	ຮັກສາການຫົວໜ້າກົມຕິດຕາມກວດກາ ການດຳເນີນຄະດີແພ່ງ

ຄົ້ນຄວ້າ ແລະ ຮຽບຮຽງໂດຍກຸ່ມຄົ້ນຄວ້າປະມວນກົດໝາຍອາຍາ

1. ທ່ານ ທະນົງສັກ ຣາຊະພົນ	ສານປະຊາຊົນພາກກາງ
2. ທ່ານ ພອນສະຫວັນ ພວງພິດົກ	ສານປະຊາຊົນນະຄອນຫຼວງ
3. ທ່ານ ມອນຄຳ ພັນຍານຸວົງ	ສານປະຊາຊົນສູງສຸດ
4. ທ່ານ ສຸລິເດດ ສໍອິນໄຊ	ສານປະຊາຊົນສູງສຸດ
5. ທ່ານ ພຸດສະຫວັນ ຈັນທະສິດ	ສານປະຊາຊົນສູງສຸດ
6. ທ່ານ ອຈ. ແສງທະວີ ອິນທະວົງ	ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ
7. ທ່ານ ກິດຕິສັກ ບຸດສາແສງ	ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ
8. ທ່ານ ພອນໄຊ ປະພັດສະລາງ	ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ
9. ທ່ານ ເຂົ້ງຄຳ ສີຫາລາດ	ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ
10. ທ່ານ ນ. ອູຄຳ ໂສລະພົມ	ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ
11. ທ່ານ ນ. ຈັນສີດາ ສີສຸລາດ	ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ
12. ທ່ານ ສຸພາສິດ ລໍວັນໄຊ	ອົງການໄອຍະການປະຊາຊົນສູງສຸດ
13. ທ່ານ ຄຳໄພ ກຸມພົນພັກດີ	ອົງການປະຊາຊົນພາກໃຕ້
14. ທ່ານ ທອງວັນ ແກ້ວວິໄລ	ອົງການໄອຍະການປະຊາຊົນສູງສຸດ

15. ທ່ານ ບຸນລ້ຳ ແສງມະນີ	ອົງການໄອຍະການປະຊາຊົນແຂວງວຽງຈັນ
16. ທ່ານ ນ. ຂັນມາລາ ແກ້ວບົວລາ	ອົງການໄອຍະການເຂດ 2, ອົງການໄອຍະການປະຊາຊົນສູງສຸດ
17. ທ່ານ ນ. ເມັດມະນີ ວັນນະສີ	ອົງການໄອຍະການປະຊາຊົນສູງສຸດ
18. ທ່ານ ສັນຕິສຸກ ພັນທະນາໄລ	ກະຊວງຍຸຕິທຳ
19. ທ່ານ ກັນຫາ ມີໄຊບົວ	ກະຊວງຍຸຕິທຳ
20. ທ່ານ ໂຕນີ່ ແກ້ວວິໄລ	ກະຊວງຍຸຕິທຳ
21. ທ່ານ ນ. ຄຳພວງ ທິບພະວົງ	ສະຖາບັນຍຸຕິທຳແຫ່ງຊາດ, ກະຊວງຍຸຕິທຳ
22. ທ່ານ ພູວັນ ສົງຫານາດ	ສະຖາບັນຍຸຕິທຳແຫ່ງຊາດ, ກະຊວງຍຸຕິທຳ
23. ທ່ານ ສຸລິຍັນ ຈັນທະຈັກ	ສະຖາບັນຍຸຕິທຳແຫ່ງຊາດ, ກະຊວງຍຸຕິທຳ
24. ທ່ານ ນິວັນ ສົມແສງດີ	ສະພາທະນາຍຄວາມ
25. ທ່ານ ຮອ. ຄຳສຸດໃຈ ຂຸນສີ	ກະຊວງປ້ອງກັນຄວາມສະຫງົບ
26. ທ່ານ ຮອ. ສົງທອງ ອິນມານີ	ກະຊວງປ້ອງກັນຄວາມສະຫງົບ

ໝາຍເຫດ:

- ***ກດອ:*** ໝາຍເຖິງ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ
- ***ກສປ:*** ໝາຍເຖິງ ກົດໝາຍວ່າດ້ວຍສານປະຊາຊົນ
- ***ກອຍ:*** ໝາຍເຖິງ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ
- ***ກທຄ:*** ໝາຍເຖິງ ກົດໝາຍວ່າດ້ວຍທະນາຍຄວາມ
- ***ກປດ:*** ໝາຍເຖິງ ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ
- ***ກດດ***: ໝາຍເຖິງ ກົດໝາຍວ່າດ້ວຍການດຳເນີນຄະດີເດັກ
- ***ປກຍ:*** ໝາຍເຖິງ ປະມວນກົດໝາຍອາຍາ
- ***ສສ-ສສ:*** ໝາຍເຖິງ ສືບສວນ-ສອບສວນ
- - - - - → ໝາຍເຖິງ ການດຳເນີນຄະດີຈະສິ້ນສຸດລົງ ຫຼື ຈະກັບໄປເລີ່ມຈາກຂັ້ນຕອນໃດໜຶ່ງຄືນໃໝ່ເມື່ອຮອດຂັ້ນຕອນນັ້ນແລ້ວ
- ⟶ ໝາຍເຖິງ ການດຳເນີນຄະດີຈາກຂັ້ນຕອນໜຶ່ງໄປຫາອີກຂັ້ນຕອນໜຶ່ງຕາມປົກກະຕິຂອງຂັ້ນຕອນການດຳເນີນຄະດີ
- ⇨ ໝາຍເຖິງ ການດຳເນີນຄະດີຈາກອົງການ ສສ-ສສ ໄປຫາອົງການໄອຍະການ ແລະ ຈາກອົງການໄອຍະການໄປຫາສານ

ຄຳນຳ

ໂຄງການພັດທະນາຊັບພະຍາກອນມະນຸດໃນຂົງເຂດຍຸຕິທຳແຫ່ງ ສປປລາວ ເປັນໂຄງການຮ່ວມມືລະຫວ່າງອົງການໄອຍະການປະຊາຊົນ, ສານປະຊາຊົນ, ມະຫາວິທະຍາໄລແຫ່ງຊາດ ຄະນະນິຕິສາດ ແລະ ລັດຖະສາດ, ກະຊວງຍຸຕິທຳ ກັບອົງການ JICA ທີ່ປະເທດຍີ່ປຸ່ນໂດຍມີວັດຖຸປະສົງໃນການພັດທະນາ ແລະ ສົ່ງເສີມການຂຽນປຶ້ມຄູ່ມືກ່ຽວກັບວຽກງານຍຸຕິທຳເພື່ອເປັນບ່ອນອີງໃນການປະຕິບັດວຽກງານໃນຂົງເຂດຍຸຕິທຳໃນປັດຈຸບັນກໍ່ຄືໃນອະນາຄົດ. ດັ່ງນັ້ນ, ການຂຽນປຶ້ມຄູ່ມືການດຳເນີນຄະດີອາຍາກໍເປັນວຽກງານໜຶ່ງທີ່ນອນຢູ່ໃນໂຄງການດັ່ງກ່າວ.

ຕະຫຼອດໄລຍະເກືອບສີ່ປີທີ່ຜ່ານມາຄະນະຮັບຜິດຊອບຂຽນປຶ້ມຄູ່ມືການດຳເນີນຄະດີອາຍາ ໄດ້ດຳເນີນໂຄງການຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງໂດຍໄດ້ມີການວາງແຜນການ, ມອບໝາຍວຽກງານໃນແຕ່ລະດ້ານໃຫ້ແກ່ສະມາຊິກຮັບຜິດຊອບ, ມີການຈັດກອງປະຊຸມເພື່ອລະດົມຄວາມຄິດເຫັນ, ຈັດສຳມະນາຢູ່ພາຍໃນ ແລະ ຕ່າງແຂວງເປັນແຕ່ລະໄລຍະລວມມີການຈັດທີມງານລົງໄປຕ່າງແຂວງເພື່ອເກັບກຳຂໍ້ມູນ ແລະ ສຳພາດກ່ຽວກັບການປະຕິບັດວຽກງານຂອງພະນັກງານໃນຂົງເຂດຍຸຕິທຳເຊັ່ນ: ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານໄອຍະການ ແລະ ບັນດາຜູ້ພິພາກສາເພື່ອເປັນບ່ອນອີງໃຫ້ແກ່ໂຄງການຂຽນປຶ້ມຄູ່ມືດັ່ງກ່າວໃນອະນາຄົດ, ພ້ອມກັນນັ້ນກໍໄດ້ມີການໄປສຳມະນາ ແລະ ທັດສະນະສຶກສາຢູ່ຕ່າງປະເທດໂດຍສະເພາະປະເທດຍີ່ປຸ່ນ, ສສ ຫວຽດນາມ ແລະ ປະເທດໄທເປັນຕົ້ນ. ໄລຍະທຳອິດຂອງໂຄງການຄະນະຮັບຜິດຊອບຂຽນປຶ້ມຄູ່ມືນີ້ໄດ້ສຳເລັດການສ້າງແຜນວາດຂອງການດຳເນີນຄະດີອາຍາ ໂດຍອີງໃສ່ກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງເປັນບ່ອນອີງຕົ້ນຕໍໃນການສ້າງແຜນວາດນີ້ເລີ່ມແຕ່ມີການກະທຳຜິດ ຫຼື ມີການແຈ້ງຄວາມໄປຈົນຮອດການພິຈາລະນາຕັດສິນກ່ຽວກັບການກະທຳຜິດ, ນອກນັ້ນແຜນວາດຍັງຊີ້ໃຫ້ເຫັນການເຄື່ອນໄຫວວຽກງານສືບສວນ-ສອບສວນ, ອົງການໄອຍະການ, ສານ ແລະ ພາກສ່ວນປົກປ້ອງກົດໝາຍອື່ນຄືທະນາຍຄວາມເປັນຕົ້ນ.

ຄະນະຮັບຜິດຊອບຂຽນປຶ້ມຄູ່ມືຫວັງຢ່າງຍິ່ງວ່າແຜນວາດການດຳເນີນຄະດີອາຍາຈະເປັນຜົນປະໂຫຍດໃຫ້ແກ່ການປະຕິບັດວຽກງານໂດຍສະເພາະແມ່ນອົງການ ແລະ ພະນັກງານໃນຂົງເຂດວຽກງານຍຸຕິທຳບໍ່ຫຼາຍກໍໜ້ອຍ. ພ້ອມກັນນີ້ກໍຍັງເປັນຜົນປະ�โຫຍດສຳລັບນັກສຶກສາກົດໝາຍ ແລະ ຜູ້ສົນໃຈໃນການດຳເນີນ ຄະດີອາຍາອີກ,

ຄະນະຊີ້ນຳໂຄງການ

ສຈ.ເກດ ກຽດຕິສັກ

ຄຳນຳ
(ປັບປຸງໃໝ່)

ໃນໄລຍະການສືບຕໍ່ໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງ ລັດທີ່ປົກຄອງດ້ວຍກົດໝາຍ ໃນຂົງເຂດຍຸຕິທຳຢູ່ ສປປ ລາວ ນີ້ ກົດໝາຍຫຼາຍສະບັບໄດ້ມີການປັບປຸງໂດຍສະເພາະກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ເຮັດໃຫ້ແຜນວາດການດຳເນີນຄະດີອາຍາທີ່ໄດ້ພິມແຈກຢາຍໄປແລ້ວນັ້ນມີບາງເນື້ອໃນບໍ່ທັນສອດຄ່ອງກັບກົດໝາຍທີ່ໄດ້ປັບປຸງ. ສະນັ້ນ ຈຶ່ງມີຄວາມຈຳເປັນຕ້ອງໄດ້ປັບປຸງເນື້ອໃນຕ່າງໆທີ່ມີຢູ່ໃນແຜນວາດດຳເນີນຄະດີອາຍາ ເພື່ອໃຫ້ສອດຄ່ອງ ແລະ ແທດເໝາະກັບສະພາບຄວາມເປັນຈິງ. ພ້ອມນັ້ນ, ແຜນວາດການດຳເນີນຄະດີອາຍາທີ່ພິມແຈກຢາຍຜ່ານມານັ້ນໄດ້ເປັນຄູ່ມືທີ່ດີແກ່ເຈົ້າໜ້າທີ່, ໄອຍະການ ແລະ ຜູ້ພິພາກສາໃນການປະຕິບັດໜ້າທີ່ວຽກງານ ເປັນບ່ອນອີງໃຫ້ແກ່ທະນາຍຄວາມ ແລະ ຄູ່ຄວາມໃນຄະດີໃນການນຳໃຊ້, ຕິດຕາມກວດກາການດຳເນີນຄະດີອາຍາຢູ່ໃນຂັ້ນຕອນຕ່າງໆ ພ້ອມນັ້ນກໍເປັນປະໂຫຍດທີ່ສຸດຕໍ່ບັນດາອາຈານສອນກົດໝາຍ, ນັກສຶກສາກົດໝາຍ ແລະ ນັກກົດໝາຍອື່ນໃນການສຶກສາ, ຄົ້ນຄວ້າຂັ້ນຕອນການດຳເນີນຄະດີອາຍາຢູ່ ສປປ ລາວ. ດັ່ງນັ້ນ, ຄະນະຮັບຜິດຊອບໂຄງການຈຶ່ງຕົກລົງໃຫ້ເປັນກິດຈະກຳໜຶ່ງຂອງໂຄງການເພື່ອປັບປຸງແຜນວາດການດຳເນີນຄະດີອາຍາ.

ຕະຫຼອດໄລຍະຜ່ານມາຄະນະຮັບຜິດຊອບ ພ້ອມທັງສະມາຊິກຂອງກຸ່ມຄົ້ນຄວ້າປະມວນກົດໝາຍອາຍາ ໄດ້ສຸມໃສ່ຄົ້ນຄວ້າປັບປຸງແຜນວາດການດຳເນີນຄະດີອາຍາໂດຍໄດ້ມີການວາງແຜນ, ມອບໝາຍວຽກງານໃນແຕ່ລະດ້ານໃຫ້ແກ່ສະມາຊິກຮັບຜິດຊອບ, ມີການຈັດກອງປະຊຸມເພື່ອລະດົມຄວາມຄິດເຫັນ, ມີການຈັດສຳມະນາຢູ່ພາຍໃນ ແລະ ຕ່າງແຂວງເປັນແຕ່ລະໄລຍະ. ແຜນວາດຂອງການດຳເນີນຄະດີອາຍາ ສະບັບປັງປຸງໃໝ່ນີ້ ແມ່ນໄດ້ອີງໃສ່ກົດໝາຍສະບັບປັບປຸງປີ 2017 ແລະ ພາກປະຕິບັດຕົວຈິງ ແລະ ໄດ້ມີການເພີ່ມແຜນວາດຂອງການເຂົ້າຮ່ວມຜູ້ຖືກສົງໄສ, ຜູ້ຖືກຫາ ແລະ ຈຳເລີຍ ໃນການດຳເນີນຄະດີອາຍາ ເຂົ້າໃສ່ຕື່ມອີກ.

ຄະນະຮັບຜິດຊອບຂອງກຸ່ມຄົ້ນຄວ້າປະມວນກົດໝາຍອາຍາພ້ອມທັງສະມາຊິກ ຫວັງຢ່າງຍິ່ງວ່າແຜນວາດການດຳເນີນຄະດີອາຍາ ສະບັບປັບປຸງໃໝ່ນີ້ຈະເປັນປະໂຫຍດໃຫ້ແກ່ການປະຕິບັດວຽກງານໂດຍສະເພາະແມ່ນອົງການ ແລະ ພະນັກງານໃນຂົງເຂດວຽກງານຍຸຕິທຳບໍ່ຫຼາຍກໍ່ໜ້ອຍ. ພ້ອມກັນນີ້ກໍຍັງເປັນຜົນປະໂຫຍດສຳລັບນັກກົດໝາຍ ແລະ ຜູ້ສົນໃຈໃນການດຳເນີນຄະດີອາຍາອີກດ້ວຍ.

ຄະນະຊີ້ນຳໂຄງການ

ບຸນຂວາງ ທະວີສັກ

ແຜນວາດການດຳເນີນຄະດີອາຍາຢູ່ ສປປ ລາວ

ການດຳເນີນຄະດີອາຍາໃນຂັ້ນຕອນຂອງເຈົ້າໜ້າທີ່ ສສ-ສສ

ມີສາເຫດທີ່ພາໃຫ້ເປີດການ ສສ-ສສ (ມ 86 ກດອ)

- ມີຄຳຮ້ອງຟ້ອງ ຫຼື ແຈ້ງຄວາມ (ມ 87 ກດອ)
- ເຂົ້າມອບຕົວຂອງຜູ້ກະທຳຜິດ (ມ 88 ກດອ)
- ພົບເຫັນຮ່ອງຮອຍຂອງການກະທຳຜິດ (ມ 89 ກດອ), ຖ້າວ່າຄຳຮ້ອງຟ້ອງ ຫຼື ແຈ້ງຄວາມນັ້ນຫາກບໍ່ຢູ່ໃນສິດອຳນາດກໍສົ່ງຄຳຮ້ອງຟ້ອງ ຫຼື ແຈ້ງຄວາມ ນັ້ນໄປໃຫ້ອົງການທີ່ມີສິດ ແລະ ໜ້າທີ່ທີ່ກ່ຽວຂ້ອງພິຈາລະນາ (ມ 90 ວັກ1 ຂໍ້3 ກດອ) ຖ້າຈຳເປັນອາດພາຕົວ (ມ 137 ກດອ) ກັກຕົວ (ມ 138 ກດອ) ຫຼື ຈັບຕົວໃນກໍລະນີເຊິ່ງໜ້າ ຫຼື ຮີບດ່ວນ (ມ 140 ກດອ) ຖ້າມີພື້ນຖານທີ່ໜັກແໜ້ນກ່ຽວກັບການກະທຳຜິດຕ້ອງລາຍງານໃຫ້ຫົວໜ້າອົງການໄອຍະການພາຍໃນ **24** ຊົ່ວໂມງ (ມ 95 ວັກ1 ກດອ) ມີສິດມີທະນາຍຄວາມ (ມ 14 ວັກ1 ກດອ).

ອອກຄຳສັ່ງເປີດການ ສສ-ສສ (ມ 84 ແລະ 91 ກດອ)

- ມີຂໍ້ມູນໜັກແໜ້ນ (ມ91 ວັກ1 ກດອ)
- ໃນກໍລະນີຫົວໜ້າອົງການ ສສ-ສສ ອອກຄຳສັ່ງຕ້ອງລາຍງານໃຫ້ຫົວໜ້າ ອົງການໄອຍະການຊາບ (ມ 91 ວັກ2 ຫຼື 95 ວັກ2 ກດອ)

ອອກຄຳສັ່ງບໍ່ເປີດການ ສສ-ສສ (ມ 93 ກດອ)

- ມີສາເຫດທີ່ບໍ່ພາໃຫ້ເປີດການ ສສ-ສສ (ມ 92 ກດອ)
- ແຈ້ງໃຫ້ຜູ້ຮ້ອງຟ້ອງ ຫຼື ຜູ້ແຈ້ງຄວາມຊາບ, ຂໍອຸທອນໄດ້ ພາຍໃນ **7** ວັນ (ມ 93 ກດອ)

ດຳເນີນການ ສສ-ສສ (ມ 95 ວັກ3 ກດອ)

- ນຳໃຊ້ວິທີການ ສສ-ສສ (ມ 113 – 134 ກດອ) ແລະ ມາດຕະການສະກັດກັ້ນ (ມ 135 - 145 ກດອ) (ຍົກເວັ້ນການກັກຕົວ (ມ 13ກດອ))
- ສະຖານໂທສານຸໂທດຕ້ອງສຳເລັດພາຍໃນ **2** ເດືອນ, ຂໍຕໍ່ໄດ້ເທື່ອລະ **2** ເດືອນ ແຕ່ບໍ່ເກີນ **6** ເດືອນ ແລະ ສະຖານຄະຮຸໂທດ **3** ເດືອນ, ຂໍຕໍ່ໄດ້ ເທື່ອລະ **3** ເດືອນ ແຕ່ບໍ່ເກີນ **1** ປີ ນັບແຕ່ມື້ອອກຄຳສັ່ງເປີດການ ສສ-ສສ ເປັນຕົ້ນໄປ (ມ 110 ກດອ)
- ແຈ້ງສິດ ແລະ ພັນທະໃນການຕໍ່ສູ້ຄະດີ (ມ 116 ວັກ2 ກດອ)
- ທະນາຍຄວາມເຂົ້າຮ່ວມຟັງການ ສສ-ສສ (ມ 71 ວັກ3 ຂໍ້2 ກດອ ແລະ ມ 20 ຂໍ້2 ກທຄ)

ໂຈະການດຳເນີນຄະດີ (ມ 146 ກດອ)

- ຜູ້ຖືກຫາລີ້ຊ່ອນ, ຫຼົບຫຼີກ, ບໍ່ຮູ້ທີ່ຢູ່, ບໍ່ຮູ້ຜູ້ກະທຳຜິດ,
- ຜູ້ຖືກຫາເຈັບປ່ວຍໜັກ ຫຼື ເປັນບ້າເສັຍຈິດ;
- ລາຍງານຫົວໜ້າອົງການໄອຍະການພາຍໃນ **24** ຊົ່ວໂມງ
- ສາມາດສືບຕໍ່ໄດ້ (ມ 147 ກດອ)

ຊັດມ້ຽນຄະດີ (ມ 148 ກດອ)

- ມີສາເຫດຕາມ (ມ 6 ກດອ) ບໍ່ມີຫຼັກຖານພຽງພໍ
- ລາຍງານຕໍ່ອົງການໄອຍະການ (ມ 150 ວັກທ້າຍ ກດອ)
- ປ່ອຍຕົວຜູ້ຖືກຫາທັນໃດ, ສົ່ງສິ່ງຂອງຕິດຕົວທີ່ຖືກກົດໝາຍ ແລະ ຂອງກາງ ທີ່ເປັນກຳມະສິດຄືນແກ່ຜູ້ກ່ຽວ
- ສາມາດສືບຕໍ່ໄດ້ (ມ 149 ວັກ3 ກດອ, ຍົກເວັ້ນຊັດມ້ຽນທາງກົດໝາຍ ມ 149 ວັກ1 ກດອ)
- ຖ້າເປັນການຊັດມ້ຽນຕາມມາດຕາ 6 ຂໍ້ 8 ກດຍ ກ່ຽວກັບຂອງກາງຄະດີ, ຄ່າ ເສຍຫາຍທາງແພ່ງ ໃຫ້ສະຫຼຸບຄະດີເພື່ອສະເໜີຕໍ່ສານພິຈາລະນາ

ສະຫຼຸບການ ສສ-ສສ ສົ່ງອົງການໄອຍະການ (ມ 150 ກດອ)

- ມີຫຼັກຖານຢັ້ງຢືນວ່າຜູ້ຖືກຫາໄດ້ກະທຳຜິດ
- ສົ່ງບົດສະຫຼຸບພ້ອມດ້ວຍສຳນວນຄະດີ ແລະ ຂອງກາງສົ່ງໃຫ້ອົງການໄອຍະການພາຍໃນ **3** ວັນ

ການດຳເນີນຄະດີອາຍາໃນຂັ້ນຕອນຂອງໄອຍະການ

ຫົວໜ້າອົງການໄອຍະການຄົ້ນຄວ້າຄະດີ (ມ 152 ກດອ)

- ຄົ້ນຄວ້າຢ່າງຊ້າບໍ່ໃຫ້ເກີນ **15** ວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ.

- ປ່ຽນແປງ, ເພີ່ມເຕີມ, ຍົກເລີກ ຫຼື ລົບລ້າງມາດຕະການສະກັດກັ້ນ (ມ 152 ຂໍ້ 4 ກດອ)

ສົ່ງສຳນວນຄືນໃຫ້ອົງການ ສສ-ສສ (ມ 152 ວັກ1ຂໍ້1

- ການ ສສ-ສສ ບໍ່ຄົບຖ້ວນເພື່ອໃຫ້ ສສ-ສສ ເພີ່ມເຕີມ.

ໂຈະການດຳເນີນຄະດີ (ມ 152 ວັກ1 ຂໍ້2 ກດອ)

- ຢຸດເຊົາການ ສສ-ສສ ໄວ້ຊົ່ວຄາວເມື່ອມີສາເຫດໃດໜຶ່ງຕາມ (ມ 146 ກດອ)

ຊັດມ້ຽນຄະດີ (ມ 152 ວັກ1 ຂໍ້3 ກດອ)

- ຢຸດເຊົາການດຳເນີນຄະດີດ້ວຍສາເຫດໃດໜຶ່ງຕາມ (ມ 6 ແລະ 148 ກດອ)

ບໍ່ສົ່ງໃຫ້ສານ (ມ 155 ກດອ)

- ເດັກກະທຳຜິດທີ່ກົດໝາຍກຳນົດໂທດຕັດອິດສະລະພາບຕ່ຳກວ່າ **3** ປີລົງມາ
- ສົ່ງໃຫ້ອົງການອື່ນແກ້ໄຂ (ມ 52 ກປດ, ມ 87 ວັກ2 ປກຍ, ມ 29 ແລະ ມ 36

ສັ່ງຟ້ອງຂຶ້ນສານ (ມ 152 ວັກ1 ຂໍ້5 ແລະ 154 ກດອ)

- ກ່ອນສົ່ງໃຫ້ສານຕ້ອງແຈ້ງຄຳສັ່ງຟ້ອງໃຫ້ຜູ້ຖືກຫາ ຫຼື ທະນາຍຄວາມລົງລາຍເຊັນຮັບຮູ້ພາຍໃນ **3** ວັນລັດຖະການ, ຖ້າບໍ່ລົງລາຍເຊັນໃຫ້ບັນທຶກໄວ້ (ມ 154 ວັກ3 ກດອ)
- ສົ່ງທັງສຳນວນຄະດີ ແລະ ຂອງກາງໃຫ້ສານ (ມ 154 ວັກທ້າຍ ກດອ)
- ຖ້າສັ່ງຟ້ອງຂຶ້ນສານໂດຍກົງຕ້ອງສັ່ງຟ້ອງພາຍໃນ **48** ຊົ່ວໂມງ ຫຼື **7** ວັນໃນເຂດຫ່າງໄກ (ມ 157 - 159 ກດອ)

ການດຳເນີນຄະດີອາຍາໃນສານຂັ້ນຕົ້ນ

ຮັບເອົາສຳນວນຄະດີມາພິຈາລະນາ (ມ 164 ກດອ)

- ຕ້ອງມີຄຳສັ່ງຟ້ອງຂອງຫົວໜ້າອົງການໄອຍະການ
- ພິຈາລະນາຕັດສິນພາຍໃນ **30** ວັນ ນັບຕັ້ງແຕ່ໄດ້ຮັບຄຳສັ່ງຟ້ອງ (ມ 165 ວັກ1 ກດອ)
- ຖ້າສັ່ງຟ້ອງຂຶ້ນສານໂດຍກົງພິຈາລະນາຕັດສິນພາຍໃນ **48** ຊົ່ວໂມງ ນັບແຕ່ໄດ້ຮັບຄຳສັ່ງຟ້ອງ (ມ 165 ວັກ2 ກດອ)

ການຄົ້ນຄວ້າສຳນວນຄະດີ (ມ 167 ກດອ)

- ຜູ້ພິພາກສາຄົ້ນຄວ້າຕາມການມອບໝາຍຂອງປະທານສານ
- ນຳສະເໜີປະທານສານຄືນເພື່ອພິຈາລະນາຕໍ່ໄປ

ສົ່ງໃຫ້ອົງການໄອຍະການ ສສ-ສສ ຫຼື ສັ່ງຟ້ອງເພີ່ມເຕີມ (ມ 167 ວັກ1 ຂໍ້1, 2 ກດອ)

- ສສ-ສສ ເພີ່ມເຕີມ, ຖ້າການ ສສ-ສສ ບໍ່ຄົບຖ້ວນ ຫຼື ຂາດຫຼັກຖານທີ່ສຳຄັນ (ມ 168 ກດອ). ໃນກໍລະນີສານສົ່ງສຳນວນຄະດີຄືນໃຫ້ອົງການໄອຍະການເພື່ອ ສສ-ສສ ເພີ່ມເຕີມ, ກຳນົດເວລາແມ່ນ **1** ເດືອນ (ມ 168 ວັກ3 ກດອ)
- ສົ່ງຟ້ອງເພີ່ມເຕີມຖ້າຍັງມີການກະທຳຜິດອື່ນ ຫຼື ຜູ້ກະທຳຜິດອື່ນໃນຄະດີດຽວກັນ.

ຕົກລົງເວລາ ແລະ ກຳນົດຄະດີອອກພິຈາລະນາ (ມ 167 ວັກ1 ຂໍ້3 ແລະ 169 ກດອ)

- ປະທານສານອອກຄຳສັ່ງໃຫ້ນຳເອົາຄະດີອອກພິຈາລະນາໃນທີ່ປະຊຸມສານ (ມ 169 ກດອ)
- ກ່ອນເປີດປະຊຸມສານຈ່າສານອອກໝາຍຮຽກ, ໝາຍເຊີນ, ກະກຽມປະຊຸມສານ (ມ 44 ກສປ)

ການຄົ້ນຄວ້າ ແລະ ການພິຈາລະນາຕັດສິນຄະດີອາຍາ

ເປີດປະຊຸມສານເປັນຂັ້ນຕົ້ນ (ມ 185 ກດອ)

- ຈ່າສານແຈ້ງລະບຽບ (ມ 185 ກດອ)
- ປະທານຄະນະສານແຈ້ງຄະດີອອກພິຈາລະນາ (ມ 186 ກດອ)
- ປະທານຄະນະສານແຈ້ງຊື່ຄະນະສານ (ມ 187 ກດອ); ສິດຄ້ານຕົວ (ມ 188 ກດອ)

ໄຕ່ສວນຄະດີໃນທີ່ປະຊຸມສານ (ມ 192 -199 ກດອ)

ໂຈະ ຫຼື ເລື່ອນການ ໄຕ່ສວນ (ມ 181 ກດອ)

- ຢຸດເຊົາການປະຊຸມສານຊົ່ວຄາວ ຍ້ອນມີສະພາບການໃດໜຶ່ງ
- ຕົກລົງເອົາຄະດີໄປໄຕ່ສວນໃນວັນ ຂ້າງໜ້າ ການເລື່ອນແຕ່ລະຄັ້ງສູງສຸດ ບໍ່ໃຫ້ເກີນ **7** ວັນ (ມ 182 ກດອ)

- ຫົວໜ້າອົງການໄອຍະການອ່ານຄຳສັ່ງຟ້ອງ (ມ 193 ກດອ)
- ປະທານຄະນະສານໄຕ່ສວນຜູ້ເຂົ້າຮ່ວມ (ມ 195 -197 ກດອ)
- ຜູ້ຊ່ຽວຊານ, ຜູ້ຊຳນານງານມີຄຳເຫັນ (ມ 198 ກດອ)
- ສະແດງຫຼັກຖານ (ມ 199 ກດອ)
- ທຸກສະພາບການຂອງຄະດີໄດ້ນຳມາໄຕ່ສວນໃນທີ່ປະຊຸມສານຢ່າງຄົບຖ້ວນແລ້ວ (ມ 200 ວັກ1 ກດອ)

ການໂຕ້ຖຽງໃນທີ່ປະ ຊຸມສານ (ມ 202 ກດອ)

- ຫົວໜ້າອົງການໄອຍະການຊີ້ແຈງກ່ຽວກັບຫຼັກຖານຜູກມັດ ແລະ ຄວາມຮັບຜິດຊອບຂອງ ຈຳເລີຍ (ມ 201 ວັກ2 ກດອ)
- ຈຳເລີຍມີຄຳເຫັນປົກປ້ອງຕົນເອງ (ມ 201 ວັກ3 ກດອ), ຈຳເລີຍ, ທະນາຍຄວາມ ຫຼື ຜູ້ປົກ ປ້ອງໃຫ້ຄຳເຫັນກ່ຽວກັບຂໍ້ກ່າວຫາ (ມ 202 ວັກ1 ກດອ)
- ຫົວໜ້າອົງການໄອຍະການ ຖະແຫຼງ (ມ 202 ວັກທ້າຍ ກດອ)
- ຈຳເລີຍມີຄຳເຫັນ (ມ 203 ວັກ1 ກດອ)
- ປິດປະຊຸມສານຊົ່ວຄາວ

ພິຈາລະນາຄະດີໃນຫ້ອງ ປະຊຸມລັບ (ມ 204 ກດອ)

- ອົງໃສ່ຜົນຂອງການໄຕ່ສວນ (ມ 204 ວັກ1 ກດອ)
- ຄຳຊີ້ຂາດຕ້ອງຖືເອົາຕາມສຽງສ່ວນຫຼາຍ (ມ 204 ວັກ2 ກດອ)
- ລົງລາຍເຊັນໃສ່ຮ່າງຄຳຕັດສິນ (ມ 204 ວັກທ້າຍ ກດອ)

ອ່ານຄຳຕັດສິນໃນທີ່ປະຊຸມສານ (ມ 206 - 209 ກດອ)

- ຕັດສິນວ່າຜິດ ແລະ ລົງໂທດ (ມ 208 ຂໍ້1 ກດອ) ຫຼື ຕັດສິນວ່າບໍ່ຜິດໃຫ້ພົ້ນຂໍ້ກ່າວຫາ (ມ 208 ຂໍ້2 ກດອ)
- ມີສິດຂໍອຸທອນ ຫຼື ຄັດຄ້ານພາຍໃນ **20** ວັນ, ຖ້າຂໍອຸທອນ ຫຼື ຄັດຄ້ານຕ້ອງສົ່ງໃຫ້ສານ ຂັ້ນອຸທອນພິຈາລະນາຕໍ່ໄປ (ມ 214 ວັກ2 ກດອ)
- ຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຕ້ອງນຳໄປຈັດຕັ້ງປະຕິບັດ (ມ 235 ກດອ)

ການດຳເນີນຄະດີອາຍາໃນຂັ້ນຕອນຂອງສານຂັ້ນອຸທອນ ແລະ ຂັ້ນລົບລ້າງ

ຂໍອຸທອນ ຫຼື ສະເໜີຄັດຄ້ານ (ມ 214 ກດອ)

- ມີສິດຂໍອຸທອນ ຫຼື ສະເໜີຄັດຄ້ານຄຳສັ່ງ, ຄຳຊີ້ຂາດຂອງສານຂັ້ນຕົ້ນພາຍໃນກຳນົດ **7** ວັນ ນັບແຕ່ວັນຮັບຊາບເປັນຕົ້ນໄປ, ສຳລັບຄຳຕັດສິນກຳນົດເວລາ **20** ວັນ ນັບແຕ່ວັນໄດ້ອ່ານ ຫຼື ຮັບຊາບຄຳຕັດສິນເປັນຕົ້ນໄປ (ມ 214 ວັກ2 ກດອ)

ດຳເນີນຄະດີຢູ່ສານຂັ້ນອຸທອນ (ມ 211 – 224 ກດອ)

- ຕ້ອງພິຈາລະນາພາຍໃນກຳນົດ **45** ວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ (ມ 216 ກດອ)
- ດຳເນີນຄືກັນກັບສານຂັ້ນຕົ້ນ (ມ 167, 170 - 207 ກດອ)
- ໃຫ້ຜູ້ຂໍອຸທອນ ຫຼື ຫົວໜ້າອົງການໄອຍະການຂັ້ນອຸທອນສະເໜີເຫດຜົນກ່ຽວກັບການຂໍອຸທອນ ຫຼື ສະເໜີຄັດຄ້ານ (ມ 219 ວັກ2 ກດອ)

ພິພາກສາເປັນຂັ້ນອຸທອນ (ມ 222 ກດອ)

- ພິພາກສາຢັ້ງຢືນຕາມສານຂັ້ນຕົ້ນ ຫຼື ປ່ຽນແປງແລ້ວພິພາກສາຄືນໃໝ່ ຫຼື ລົບລ້າງແລ້ວສົ່ງໄປໃຫ້ສານຂັ້ນຕົ້ນພິຈາລະນາຄືນໃໝ່ ຫຼື ລົບລ້າງຄຳຕັດສິນຂອງສານຂັ້ນຕົ້ນແລ້ວພິພາກສາໃຫ້ຈຳເລີຍຜົນຂໍ້ກ່າວຫາ (ມ 222 ວັກ1 ກດອ)

ຂໍລົບລ້າງ ຫຼື ສະເໜີຄັດຄ້ານ (ມ 226 ກດອ)

- ມີສິດຂໍລົບລ້າງ ຫຼື ສະເໜີຄັດຄ້ານຄຳສັ່ງ, ຄຳຊີ້ຂາດຂອງສານຂັ້ນອຸທອນພາຍໃນກຳນົດ 7 ວັນ ນັບແຕ່ວັນໄດ້ຮັບຊາບເປັນຕົ້ນໄປ, ສຳລັບຄຳພິພາກສາກຳນົດເວລາ **45** ວັນ ນັບແຕ່ວັນໄດ້ອ່ານ ຫຼື ຮັບຊາບຄຳພິພາກສາເປັນຕົ້ນໄປ (ມ 226 ວັກ3 ກດອ)

ດຳເນີນຄະດີຢູ່ສານຂັ້ນລົບລ້າງ (ມ 225 - 234 ກດອ)

- ຕ້ອງພິຈາລະນາພິພາກສາຄະດີພາຍໃນກຳນົດ **30** ວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ (ມ 228 ກດອ)
- ປະທານຄະນະສານລາຍງານສະພາບຄະດີ, ລາຍງານກ່ຽວກັບຄຳສັ່ງ, ຄຳຊີ້ຂາດ ຫຼື ຄຳພິພາກສາ, ຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານພ້ອມທັງຄວາມເຫັນຂອງຕົນກ່ຽວກັບຄະດີ, ຫົວໜ້າອົງການໄອຍະການມີສິດຖາມຜູ້ຮັບຜິດຊອບຄະດີ, ມີຄຳເຫັນຕໍ່ປະຊຸມສານ (ມ 229 ວັກ3 ກດອ)

ພິພາກສາເປັນຂັ້ນລົບລ້າງ (ມ 231 ກດອ)

- ພິພາກສາບໍ່ຮັບເອົາຄຳຮ້ອງຂໍລົບລ້າງ ຫຼື ສະເໜີຄັດຄ້ານມາພິຈາລະນາ ຫຼື ພິພາກສາຍົກເລີກຄຳຮ້ອງຂໍລົບລ້າງ ຫຼື ສະເໜີຄັດຄ້ານແລ້ວພິພາກສາຢັ້ງຢືນຕາມສານຂັ້ນອຸທອນ ຫຼື ລົບລ້າງຄຳພິພາກສາສານຂັ້ນອຸທອນແລ້ວໃຫ້ຈຳເລີຍຜົນຂໍ້ກ່າວຫາ ຫຼື ພິພາກສາປ່ຽນແປງຄຳພິພາກສາຂອງສານຂັ້ນອຸທອນທາງດ້ານກົດໝາຍທັງໝົດ ຫຼື ບາງສ່ວນ ຫຼື ພິພາກສາລົບລ້າງຄຳພິພາກສາສານຂັ້ນອຸທອນທັງໝົດ ຫຼື ບາງສ່ວນແລ້ວສົ່ງຄະດີໃຫ້ສານຂັ້ນອຸທອນຄະນະໃໝ່ ຫຼື ຄະນະເກົ່າພິຈາລະນາຄືນໃໝ່ (ມ 231 ກດອ)

ແຜນວາດການດຳເນີນຄະດີອາຍາ ຂອງອົງການສືບສວນ-ສອບສວນ

ອົງການ ສສ-ສສ ດຳເນີນການ ສສ-ສສ ສາເຫດ ທີ່ພາໃຫ້ການເປີດການ ສສ-ສສ (ມ 86 ກດອ)

- ມີຄຳຮ້ອງຝ້ອງ ຫຼື ການແຈ້ງຄວາມ (ມ 87 ກດອ), ສິ່ງຄຳຮ້ອງຝ້ອງ ຫຼື ແຈ້ງຄວາມ ໄປໃຫ້ອົງການທີ່ມີສິດ ແລະ ໜ້າທີ່ທີ່ກ່ຽວຂ້ອງພິຈາລະນາ (ມ 90 ວັກ1 ຂໍ້3 ກດອ)
- ການເຂົ້າມອບຕົວຂອງຜູ້ກະທຳ (ມ 88 ກດອ)
- ການພົບເຫັນຮ່ອງຮອຍຂອງການກະທຳຜິດ (ມ 89 ກດອ)

- ອາດຈະອອກຄຳສັ່ງກັກຕົວ (ມ 138 ວັກ1 ກດອ), ການຈັບຕົວໃນກໍລະນີການກະທຳຜິດ ເຊິ່ງໜ້າ ແລະ ໃນກໍລະນີຮີບດ່ວນ (ມ 140 ກດອ)

ສັ່ງຟ້ອງຂຶ້ນສານໂດຍກົງ (ມ 157 ກດອ)

- ເປັນການກະທຳຜິດ ໃນສະຖານລະຫຸໂທດ ຫຼື ໂທສານຸໂທດ ທີ່ກົດໝາຍກຳນົດໂທດຕັດອິດສະລະພາບ ຕ່ຳກວ່າ 3 ປີ (ມ 158 ຂໍ້1 ກດອ)
- ມີຫຼັກຖານຄົບຖ້ວນ ເປັນຕົ້ນແມ່ນ ການກະທຳຜິດເຊິ່ງໜ້າ, ມີການຮັບສາລະພາບຂອງ ຜູ້ຖືກຫາ (ມ 158 ຂໍ້2 ກດອ);
- ເມື່ອມີເງື່ອນໄຂຄົບ ຖ້ວນ ຕາມທີ່ກຳນົດໄວ້ໃນ (ມ 158 ກດອ) ຫົວໜ້າອົງການ ສສ-ສສ ຕ້ອງສົ່ງສຳນວນຄະດີ ພ້ອມດ້ວຍ ຂອງກາງຄະດີ ແລະ ຜູ້ຖືກຫາ ໃຫ້ອົງການໄອຍະການ (ມ 159 ກດອ)

ອອກຄຳສັ່ງເປີດການ ສສ-ສສ (ມ 53 ວັກ1 ຂໍ້4 ແລະ ມ 91 ກດອ)

- ມີຂໍ້ມູນໜັກແໜ້ນ (ມ 91 ວັກ1 ກດອ)
- ລາຍງານໃຫ້ຫົວໜ້າອົງການໄອຍະການ ຊາບ (ມ 91 ວັກ2 ກດອ)

ດຳເນີນການ ສສ-ສສ (ມ 95 ກດອ)

- **ນຳໃຊ້ວິທີການ ສສ-ສສ**: ການເອົາຄຳໃຫ້ການ (ມ 115 ກດອ), ການເອົາຄຳໃຫ້ການຜູ້ຖືກຫາ (ມ 116 ກດອ), ການສອບຖາມຊ້ອງໜ້າ (ມ 119 ກດອ), ການຊີ້ຕົວ ແລະ ການຢັ້ງຢືນ (ມ 120 ກດອ), ການຍຶດ ຫຼື ອາຍັດຊັບ (ມ 128 ກດອ), ການຊັນນະສູດສະຖານທີ່ເກີດເຫດ (ມ 129 ກດອ), ການຊັນນະສູດຊາກສົບ (ມ 131 ກດອ), ການທົດສອບຂໍ້ມູນຄືນໃໝ່ (ມ 134 ກດອ), ບົດບັນທຶກການ **ສສ-ສສ** (ມ 100 ກດອ), ໝາຍຮຽກ (ມ 113 ກດອ)
- **ນຳໃຊ້ມາດຕະການສະກັດກັ້ນ:** ການພາຕົວ (ມ 137 ກດອ), ການກັກຕົວ (ມ138 ກດອ), ການຄຸມຕົວຢູ່ກັບທີ່ (ມ 144 ກດອ)
- **ສະເໜີຂໍຄຳສັ່ງ:** ຈັບຕົວ, ກັກຂັງພາງ, ປ່ອຍຕົວພາງ, ກວດຄົ້ນເຄຫາສະຖານ, ງົດໜ້າທີ່ ຫຼື ຕຳແໜ່ງ (ມ 53 ຂໍ້8 ກດອ)
- **ກຳນົດເວລາການ ສສ-ສສ:** 2 ເດືອນ ສຳລັບການກະທຳຜິດໃນສະຖານໂທສານຸໂທດ ແລະ 3 ເດືອນ ສຳລັບ ການກະທຳຜິດໃນສະຖານຄະຣຸໂທດ (ມ 110 ວັກ1 ກດອ)
- **ສະເໜີຂໍຕໍ່:** ກຳນົດເວລາການ ສສ-ສສ, ຕໍ່ກຳນົດເວລາກັກຂັງພາງ (ມ 53 ວັກ1 ຂໍ້8, ມ 110 ວັກ2, ມ 111 ວັກ2 ກດອ)
- ການກວດກາ ແລະ ຊັ່ງຊາຕີລາຄາຫຼັກຖານ (ມ 44 ກດອ)

ອອກຄຳສັ່ງບໍ່ເປີດການ ສສ-ສສ (ມ 53 ວັກ1 ຂໍ້4 ແລະ ມ 93 ກດອ)

- ແຈ້ງຄຳສັ່ງບໍ່ເປີດການ ສສ-ສສ ໃຫ້ບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ຮ້ອງຝ້ອງ ຫຼື ແຈ້ງຄວາມ ຊາບ (ມ 93 ວັກ1 ກດອ)


ການໂຈະການ ສສ-ສສ (ມ 146 ກດອ)
- ຜູ້ຖືກຫາໄດ້ລີ້ຊ່ອນ, ຫຼົບຫຼີກຈາກການດຳເນີນຄະດີ ຫຼື ບໍ່ຮູ້ບ່ອນຢູ່ຂອງຜູ້ກ່ຽວ;
- ບໍ່ສາມາດຮູ້ໄດ້ວ່າ ແມ່ນຜູ້ໃດ ເປັນຜູ້ກະທຳຜິດ;
- ຜູ້ຖືກຫາເຈັບປ່ວຍໜັກ ຫຼື ເປັນບ້າເສຍຈິດ ໂດຍມີການຢັ້ງຢືນຈາກຄະນະແພດ.
ຊັດມ້ຽນຄະດີ (ມ 148 ກດອ)
- ເມື່ອມີສາເຫດໃດໜຶ່ງທີ່ ໄດ້ນິດໄວ້ໃນ (ມ 6 ກດອ)
- ເມື່ອບໍ່ມີຫຼັກຖານພຽງພໍວ່າຜູ້ຖືກຫາໄດ້ເປັນຜູ້ກະທຳຜິດ.
ສະຫຼຸບການ ສສ-ສສ ສົ່ງອົງການໄອຍະການ (ມ 150 ກດອ)
- ສົ່ງບົດສະຫຼຸບພ້ອມດ້ວຍສຳນວນຄະດີ ແລະ ຂອງກາງສົ່ງໃຫ້ອົງການໄອຍະການພາຍ ໃນ 3 ວັນ

ແຜນວາດການດຳເນີນຄະດີອາຍາ ຂອງອົງການໄອຍະການ

ກວດກາການປະຕິບັດກົດໝາຍ ຂອງອົງການ ສສ-ສສ ສາເຫດຂອງ ການເປີດການ ສສ-ສສ (ມ 86 ກດອ)

- ມີຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມ (ມ 87 ກດອ)
- ການເຂົ້າມອບຕົວຂອງຜູ້ກະທຳຜິດ (ມ 88 ກດອ)
- ພົບເຫັນຮ່ອງຮອຍຂອງການກະທຳຜິດ (ມ 89 ກດອ)

ກໍລະນີອົງການໄອຍະການດຳເນີນການ ສສ-ສສ ສາເຫດຂອງການເປີດການ ສສ-ສສ (ມ 86 ກດອ)

ສັ່ງຟ້ອງຂຶ້ນສານໂດຍກົງ (ມ 157 - 159 ກດອ)

- ສົ່ງຄຳຮ້ອງຟ້ອງ ຫຼື ແຈ້ງຄວາມໄປໃຫ້ອົງການທີ່ມີສິດ ແລະ ໜ້າທີ່ກ່ຽວຂ້ອງພິຈາລະນາ (ມ 90 ວັກ1 ຂໍ້3 ກດອ)
- ອາດມີການກັກຕົວ (ມ 138 ກດອ), ການຈັບຕົວໃນກໍລະນີເຊິ່ງໜ້າ ແລະ ໃນກໍລະນີຮີບດ່ວນ (ມ 140 ກດອ)

ອອກຄຳສັ່ງເປີດການ ສສ-ສສ (ມ 91 ກດອ)

- ຄຳສັ່ງເປີດການ ສສ-ສສ ໂດຍບໍ່ມີຂໍ້ມູນໜັກແໜ້ນ ອົງການໄອຍະການຕ້ອງ ອອກຄຳສັ່ງລົບລ້າງແລ້ວ ອອກຄຳສັ່ງໃຫ້ຊັດມ້ຽນ ຄະດີ (ມ 94 ວັກ 2 ກດອ)

ອອກຄຳສັ່ງບໍ່ເປີດການ ສສ-ສສ (ມ 93 ກດອ)

- ຄຳສັ່ງບໍ່ເປີດການ ສສ-ສສ ໂດຍບໍ່ມີເຫດຜົນພຽງພໍໄອຍະການຕ້ອງອອກ ຄຳສັ່ງລົບລ້າງ ແລ້ວອອກຄຳສັ່ງເປີດ ການ ສສ-ສສ ດ້ວຍຕົນເອງ (ມ 94 ວັກ3 ກດອ)

ອອກຄຳສັ່ງເປີດການ ສສ-ສສ (ມ 91 ກດອ)

- ມີຂໍ້ມູນໜັກແໜ້ນ ກ່ຽວກັບການກະທຳ ຜິດ (ມ 91 ວັກ1 ກດຍ)
- ສົ່ງໃຫ້ຫົວໜ້າອົງການ ສສ-ສສ (ມ 91 ວັກ2 ກດອ)

ອອກຄຳສັ່ງບໍ່ເປີດການ ສສ-ສສ (ມ 93 ກດອ)

- ຂໍ້ມູນບໍ່ໜັກແໜ້ນ (ມ 92 ຂໍ້1 ກດຍ) ຫຼື ມີສາເຫດທີ່ຜາ ໃຫ້ການດຳເນີນຄະດີຕົກໄປ (ມ 6 ກດອ)
- ແຈ້ງໃຫ້ຄູ່ຄວາມຮັບຊາບ, ຄູ່ຄວາມມີສິດຂໍອຸທອນພາຍໃນ 7 ວັນລັດຖະການ, ຫົວໜ້າ ອົງການໄອຍະການພິຈາລະນາ ຄຳຮ້ອງດັ່ງກ່າວພາຍໃນ 5 ວັນ (ມ 93 ກດອ)

ປະຕິບັດສິດ ແລະ ໜ້າທີ່ຂອງອົງການໄອຍະການ (ມ 151 ກດອ)

- ອອກຄຳສັ່ງຈັບຕົວ, ກັກຂັງພາງ, ປ່ອຍຕົວພາງ, ກວດຄົ້ນເຄຫະສະຖານ (ມ 43 ຂໍ້5 ກອຍ ແລະ ມ 151 ຂໍ້ 9 ກດອ)
- ຕໍ່ກຳນົດເວລາການ ສສ-ສສ ແລະ ກຳນົດເວລາກັກຂັງພາງ (ມ 43 ຂໍ້6 ກຍກ ແລະ ມ 151 ຂໍ້10 ກດອ)
- ເຂົ້າຮ່ວມການ ສສ-ສສ ຫຼື ດຳເນີນການ ສສ-ສສ ດ້ວຍຕົນເອງໃນກໍລະນີທີ່ຈຳ ເປັນ (ມ 151 ຂໍ້6 ກດອ ແລະ ມ 43 ຂໍ້2 ກອຍ)
- ລົບລ້າງຄຳສັ່ງຂອງອົງການ ສສ-ສສ ທີ່ບໍ່ຖືກຕ້ອງ (ມ 43 ຂໍ້3 ກອຍ ແລະ ມ 151 ຂໍ້7 ກດອ)
- ສັ່ງໃຫ້ເຈົ້າໜ້າທີ່ ສສ-ສສ ທີ່ໄດ້ລະເມີດກົດໝາຍໃນການດຳເນີນຄະດີ ຢຸດເຊົາ ການ ສສ-ສສ (ມ 151 ຂໍ້12 ກດອ ແລະ ມ 43 ຂໍ້9 ກອຍ)

ດຳເນີນການ ສສ-ສສ (ມ 37 ຂໍ້1 ກອຍ)

- ນຳໃຊ້ວິທີການ ສສ-ສສ (ມ 113 -134 ກດອ)
- ນຳໃຊ້ມາດຕະການສະກັດກັ້ນ, ອາດມີ ການພາຕົວ, ກັກຕົວ, ຈັບຕົວ, ກັກຂັງພາງ, ປ່ອຍຕົວພາງ, ຄຸມຕົວຢູ່ກັບທີ່, ຈົ່ດໜ້າທີ່ ຫຼື ຕຳແໜ່ງ (ມ 137 - 145 ກດອ)

ສະຫຼຸບການ ສສ-ສສ ສົ່ງ ອົງການໄອຍະການ (ມ 150 ກດອ)

ໂຈະການ ສສ-ສສ (ມ 146 ກດຍ ຫຼື ຊັດມ້ຽນຄະດີ ມ 148 ກດອ)

ຄົ້ນຄວ້າສະຫລຸບສຳນວນຄະດີ (ມ 37 ຂໍ້1 ກອຍ)

ການຄົ້ນຄວ້າຄະດີຂອງອົງການໄອຍະການ ພາຍໃນກຳນົດ 15 ວັນ ຕ້ອງອອກຄຳສັ່ງໃດໜຶ່ງ (ມ 152 ກດອ)

ປ່ຽນແປງ, ເພີ່ມເຕີມ, ຍົກເລີກ ຫຼື ລົບລ້າງການນຳໃຊ້ມາດຕະການທີ່ບໍ່ຖືກຕ້ອງຂອງເຈົ້າໜ້າທີ່ ສສ-ສສ (ມ 152 ຂໍ້4 ກດອ ແລະ ມ 43 ຂໍ້3 ກອຍ)

ສົ່ງສຳນວນຄະດີຄືນໃຫ້ອົງການ ສສ-ສສ (ມ 152 ວັກ1ຂໍ້1, ມ.153 ກດອ ແລະ ມ 43 ຂໍ້7 ກອຍ)

- ການ ສສ-ສສ ບໍ່ຄົບຖ້ວນ,ໃຫ້ ສສ-ສສ ເພີ່ມເຕີມ

ໂຈະການການດຳເນີນຄະດີອາຍາ (ມ 152 ວັກ1ຂໍ້2 ກດອ ແລະ ມ 43 ຂໍ້9 ກອຍ)

- ບໍ່ຮູ້ຜູ້ກະທຳຜິດ, ຜູ້ກະທຳຜິດຫຼົບໜີ, ເຈັບເປັນ ຫຼື ເປັນບ້າເສຍຈິດ.

ຊັດມ້ຽນຄະດີ (ມ 152 ວັກ1 ວັກ3, ມ 148 ກດອ ແລະ ມ 43 ຂໍ້ 9 ກອຍ)

- ຫຼັກຖານບໍ່ພຽງພໍ (ມ 146 ວັກ1 ຂໍ້2 ກດຍ, ໝົດອາຍຸ ຄວາມຮ້ອງຟ້ອງ, ໄກ່ເກ່ຍກັນໃນຄະດີບໍ່ຮ້າຍແຮງ ແລະ ໃນກໍລະນີອື່ນໆ

ບໍ່ສົ່ງໃຫ້ສານຕັດສິນ (ມ 155 ກດອ)

- ເດັກແຕ່ **15** ຫາ ຕ່ຳກ່ວາ **18** ປີກະທຳຜິດມີໂທດຕັດອິດສະຫຼະພາບຕ່ຳກ່ວາ **3** ປີ ຈະບໍ່ສົ່ງໃຫ້ສານຕັດສິນ
- ແກ້ໄຂຕາມກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (ມ 155 ກດອ, ມ 52 ກປດ ແລະ ມ 87 ວັກ2 ປກຍ)

ສົ່ງຟ້ອງຂึ้ນສານ (ມ 152 ວັກ1 ຂໍ້5, ມ 154 ກດອ, ມ 45 ແລະ 46 ກອຍ)

- ເມື່ອມີຫຼັກຖານພຽງພໍ (ມ 152 ວັກ1 ຂໍ້5 ກດອ)
- ແຈ້ງໃຫ້ຜູ້ຖືກຫາ, ຜູ້ຖືກເສັຍຫາຍ, ໂຈດ ແລະ ຜູ້ຮັບຜິດຊອບທາງແພ່ງ ພາຍໃນ **3** ວັນລັດຖະການ (ມ 152 ວັກ2 ກດອ)
- ສົ່ງຄຳສັ່ງຟ້ອງ, ສຳນວນ ແລະ ຂອງກາງໄປຍັງສານພາຍໃນກຳນົດ **3** ວັນລັດຖະການ (ມ 152 ວັກ4 ກດອ)

ເຂົ້າຮ່ວມໃນທີ່ປະຊຸມສານ (ມ 174 ກດອ ແລະ ມ 48 ຂໍ້1 ກອຍ)

- ກວດກາທີ່ປະຊຸມສານໃຫ້ດຳເນີນໄປຢ່າງຖືກຕ້ອງຕາມກົດໝາຍ (ມ 48 ຂໍ້1 ກອຍ)
- ສົ່ງຟ້ອງ, ສະແດງຫຼັກຖານ ແລະ ຖະແຫຼງ (ມ 193, ມ 199 ແລະ ມ 202 ວັກທ້າຍ ກດອ)
- ກວດກາຄຳຕັດສິນຂອງສານ (ມ 48 ຂໍ້2)

ກວດກາການຈັດຕັ້ງປະຕິບັດຄຳຕົກລົງຂອງສານທີ່ໃຊ້ໄດ້ເດັດຂາດ (ມ 235 ກດອ ແລະ ມ 52 ກອຍ)

- ການຕິດຕາມກວດກາການຈັດຕັ້ງປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານ (ມ 235 ກດອ) ທີ່ໃຊ້ໄດ້ ຢ່າງເດັດຂາດໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ (ມ 51 ກອຍ)

ຄັດຄ້ານຄຳຕັດສິນຂອງສານຂັ້ນລຸ່ມ ແລະ ຂັ້ນຂອງຕົນ (ມ 213, 214 ວັກ2 ກດອ ແລະ ມ 48 ຂໍ້3 ກອຍ)

ເຂົ້າຮ່ວມການດຳເນີນຄະດີຢູ່ສານ ຂັ້ນອຸທອນ (ມ 174 ກດອ ແລະ ມ 48 ຂໍ້1 ກອຍ)

- ສະເໜີຫຼັກຖານ ແລະ ຖະແຫຼງຕໍ່ສານ (ມ 218 ແລະ ມ 219 ວັກ2 ກດອ)
- ຄັດຄ້ານຄຳພິພາກສາ (ມ 226, 227 ວັກ1 ກດອ ແລະ ມ 48 ຂໍ້3 ກອຍ)

ເຂົ້າຮ່ວມການດຳເນີນຄະດີຢູ່ສານຂັ້ນລົບລ້າງ (ມ 229 ວັກ1 ກດອ ແລະ ມ 48 ຂໍ້1 ກອຍ)

ແຜນວາດການດຳເນີນຄະດີອາຍາຢູ່ສານປະຊາຊົນ

ຂັ້ນຕອນການຮັບເອົາຄະດີມາ ພິຈາລະນາ (ມ 164 ກດອ)

- ຕ້ອງມີຄຳສັ່ງຟ້ອງຂຶ້ນສານຂອງຫົວໜ້າອົງການໄອຍະການເທົ່ານັ້ນ (ມ 164 ກດອ)

ການຄົ້ນຄວ້າຄະດີຂອງສານ (ມ 167 ກດອ)

- ກວດກາສຳນວນຄະດີ
- ນຳໃຊ້ວິທີການ ສສ-ສສ ແລະ ມາດຕາການສະກັດກັ້ນ (166 ກດອ)
- ສານຕ້ອງພິຈາລະນາຕັດສິນພາຍໃນກຳນົດສາມສິບວັນນັບແຕ່ໄດ້ຮັບຄຳສັ່ງຟ້ອງເປັນຕົ້ນໄປ (ມ 165 ວັກ1 ກດອ)
- ກໍລະນີສັ່ງຟ້ອງຂຶ້ນສານໂດຍກົງຕາມ ມ 157 ກດອ ສານຕ້ອງໄດ້ພິຈາລະນາຕັດສິນ ພາຍໃນກຳນົດສີ່ສິບແປດຊົ່ວໂມງ (ມ 165 ວັກທ້າຍ ກດອ)

ຕົກລົງເວລາ ແລະ ນຳເອົາຄະດີອອກ ພິຈາລະນາ (ມ 167 ວັກ1 ຂໍ້3 ແລະ ມ 169 ກດອ)

ສົ່ງສຳນວນຄະດີຄືນໃຫ້ໄອຍະການ (ມ 167 ວັກ1 ຂໍ້1, 2 ແລະ ມ 168 ກດອ)

- ສສ-ສສ ເພີ່ມເຕີມ, ຖ້າການ ສສ-ສສ ຫາກຍັງບໍ່ທັນຄົບຖ້ວນ;
- ສັ່ງຟ້ອງເພີ່ມເຕີມຫາກຍັງມີການກະທຳຜິດອື່ນ ຫຼື ບຸກຄົນອື່ນທີ່ຍັງບໍ່ທັນສັ່ງຟ້ອງຂຶ້ນສານ.

- ປະທານສານຕ້ອງອອກຄຳສັ່ງໃຫ້ນຳເອົາຄະດີອອກພິຈາລະນາໃນທີ່ປະຊຸມສານ (ມ 169 ກດອ)
- ກ່ອນປະຊຸມສານຈ່າສານອອກໝາຍຮຽກ, ໝາຍເຊີນ, ກະກຽມປະຊຸມສານ (ມ 62 ກດອ)

ເປີດປະຊຸມສານ
(ມ 185 - 188 ກດອ)

- ຂັ້ນຕອນການເປີດປະຊຸມສານ (ມ 185 ກດອ)

1. ຈ່າສານແຈ້ງລະບຽບການປະຊຸມສານ
2. ຈ່າສານລາຍງານກ່ຽວກັບຜູ້ເຂົ້າຮ່ວມໃນທີ່ປະຊຸມສານ
3. ຈ່າສານນຳເອົາຄະດີມອບໃຫ້ຄະນະສານ ເພື່ອທຳການໄຕ່ສວນ
4. ປະທານຄະນະສານ ກ່າວເປີດປະຊຸມສານ ແລ້ວອ່ານຄຳສັ່ງໃຫ້ນຳເອົາຄະດີອອກພິຈາລະນາ
5. ປະທານຄະນະສານ ຖາມຈຳເລີຍກ່ຽວກັບການຮັບຊາບຂໍ້ກ່າວຫາ

- ປະທານຄະນະສານແຈ້ງຄະດີທີ່ນຳອອກມາພິຈາລະນາ (ມ 186 ກດອ); ແຈ້ງຊື່ຄະນະສານ, ຈ່າສານ ແລະ ຫົວໜ້າອົງການໄອຍະການ (ມ 187 ກດອ) ແລະ ແຈ້ງສິດໃນການຄ້ານຕົວ ໃຫ້ຄູ່ຄວາມຊາບ ແລະ ຖາມຄຳເຫັນຂອງຈຳເລີຍ (ມ 188 ກດອ)

ການໄຕ່ສວນຄະດີໃນທີ່ປະຊຸມສານ
(ມ 192 - 199 ກດອ)

ການໂຈະ ແລະ ການເລື່ອນການ
ໄຕ່ສວນ (ມ 181 ກດອ)

- ການໂຈະແມ່ນການຢຸດເຊົາການປະຊຸມສານ ຊົ່ວຄາວຍ້ອນມີສະພາບການໃດໜຶ່ງ
- ການເລື່ອນແມ່ນການຕົກລົງເອົາຄະດີໄປໄຕ່ສວນໃນວັນໜ້າ
- ກຳນົດເວລາຂອງການເລື່ອນແຕ່ລະຄັ້ງ ສູງສຸດບໍ່ໃຫ້ເກີນ **7 ວັນ** (ມ 182 ກດອ)

- ຫົວໜ້າອົງການໄອຍະການ ອ່ານຄຳສັ່ງຟ້ອງຜູ້ຖືກຫາ (ມ 193 ກດອ)
- ການຖາມໂດຍ ປະທານຄະນະສານ, ຄະນະສານ, ຫົວໜ້າອົງການໄອຍະການ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ (ມ 194 ກດອ)
- ປະທານຄະນະສານ ຖາມຈຳເລີຍ (ມ 195 ວັກ1 ກດອ) ໃນກໍລະນີຈຳເລີຍຫຼາຍຄົນຕ້ອງແຍກໄຕ່ສວນເທື່ອລະຄົນ (ມ 195 ວັກ2 ກດອ)
- ຄະນະສານ ໄຕ່ສວນຜູ້ຖືກເສຍຫາຍ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນຂອງພວກກ່ຽວ (ມ 196 ກດອ)
- ການໄຕ່ສວນພະຍານຕ້ອງດຳເນີນເທື່ອລະຄົນ ໃນກໍລະນີມີຫຼາຍຄົນ ຕ້ອງແຍກພວກພະຍານອອກຈາກກັນ ແລະ ບໍ່ໃຫ້ຮູ້ເນື້ອໃນຄຳໃຫ້ການຂອງພະຍານອື່ນ (ມ 197 ກດອ)
- ການໃຫ້ຄຳເຫັນຂອງຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ (ມ 198 ກດອ)

ການໂຕ້ຖຽງໃນທີ່ປະຊຸມສານ
(ມ 202 ກດອ)

- ການຊີ້ແຈງຂອງຫົວໜ້າອົງການໄອຍະການ (ມ 201 ວັກ2 ກດອ)
- ຄຳເຫັນປົກປ້ອງຕົນເອງຂອງຈຳເລີຍ (ມ 201 ວັກ3 ກດອ)
- ຈຳເລີຍ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ໃຫ້ຄຳເຫັນກ່ຽວກັບຂໍ້ກ່າວຫາ (ມ 202 ວັກ1 ກດອ)
- ຫົວໜ້າອົງການໄອຍະການຖະແຫຼງ (ມ 202 ວັກທ້າຍ ກດອ)
- ຄຳເຫັນເປັນຜູ້ສຸດທ້າຍ (ມ 203 ວັກ1 ກດອ)
- ປິດປະຊຸມສານຊົ່ວຄາວ ເພື່ອນຳເອົາຄະດີໄປພິຈາລະນາຢູ່ຫ້ອງປະຊຸມລັບ (ມ 203 ວັກທ້າຍ ກດອ)

ການພິຈາລະນາຄະດີໃນຫ້ອງປະຊຸມລັບ
(ມ 204 ກດອ)

- ຜູ້ທີ່ມີຄຸນວຸດທິຫຼຸດໜ່ວ່ອກຄຳເຫັນກ່ອນ, ສ່ວນປະທານຄະນະສານ ອອກຄຳເຫັນເປັນຜູ້ສຸດທ້າຍ; ສຽງສ່ວນໜ້ອຍຂຶ້ນກັບສຽງສ່ວນຫຼາຍ; ຜູ້ມີຄຳເຫັນແຕກຕ່າງສາມາດຂຽນຄຳເຫັນຂອງຕົນປະກອບເຂົ້າໃນສຳນວນ (ມ 204 ວັກ2 ກດອ)
- ຄະນະສານຕ້ອງລົງລາຍເຊັນໃສ່ຮ່າງຄຳຕັດສິນຢູ່ຫ້ອງປະຊຸມລັບ (ມ 204 ວັກທ້າຍ ກດອ)

ອ່ານຄຳຕັດສິນໃນທີ່ປະຊຸມສານ
(ມ 206 - 209 ກດອ)

- ຕັດສິນລົງໂທດ (ມ 208 ຂໍ້1 ກດອ)
- ຕັດສິນພົ້ນຂໍ້ກ່າວຫາ (ມ 208 ຂໍ້2 ກດອ)

ຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ (ມ 235 -237 ກດອ)

ການຂໍອຸທອນ ຫຼື ສະເໜີຄັດຄ້ານ
(ມ 214 ກດອ)

- ມີສິດຂໍອຸທອນ ແລະ ຂໍສະເໜີຄັດຄ້ານຄຳສັ່ງ, ຄຳຊີ້ຂາດຂອງສານຂັ້ນຕົ້ນພາຍໃນກຳນົດ **7** ວັນ ນັບແຕ່ວັນຮັບຊາບເປັນຕົ້ນໄປ. ສຳລັບຄຳຕັດສິນ ກຳນົດເວລາແມ່ນ **20** ວັນ ນັບແຕ່ວັນໄດ້ອ່ານ ຫຼື ວັນຮັບຊາບຄຳຕັດສິນ ເປັນຕົ້ນໄປ (ມ 214 ວັກ2 ກດອ)

ດຳເນີນຄະດີຢູ່ສານຂັ້ນອຸທອນ
(ມ 211 - 224 ກດອ)

- ຕ້ອງມີຄຳຮ້ອງຂໍອຸທອນ ຫຼື ຄຳສະເໜີຄັດຄ້ານ (ມ 214 ວັກ1 ກດອ) ໂດຍຜ່ານສານຂັ້ນຕົ້ນ (ມ 215 ກດອ)
- ຕ້ອງພິຈາລະນາຄະດີພາຍໃນກຳນົດ **45** ວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ (ມ 216 ກດອ)
- ພິຈາລະນາຄືກັບສານຂັ້ນຕົ້ນ (ມ 219 ວັກ1 ກດອ)
- ໃຫ້ຜູ້ຂໍອຸທອນ ຫຼື ຫົວໜ້າອົງການໄອຍະການໃຫ້ເຫດຜົນກ່ຽວກັບການຂໍອຸທອນ ຫຼື ສະເໜີຄັດຄ້ານ (ມ 219 ວັກ2 ກດອ)
- ໃນກໍລະນີມີຫຼັກຖານໃໝ່ ສານຕ້ອງແຈ້ງໃຫ້ຫົວໜ້າອົງການໄອຍະການຂັ້ນອຸທອນ ແລະ ຜູ້ເຂົ້າຮ່ວມຊາບ (ມ 219 ວັກ3 ກດອ)
- ສານຂັ້ນອຸທອນ ຈະກວດກາທາງດ້ານຄວາມຖືກຕ້ອງຕາມກົດໝາຍ ແລະ ເຫດຜົນຂອງຄຳຕັດສິນ (ມ 220 ວັກ1 ກດອ)
- ມີສິດຜ່ອນໂທດ ແຕ່ບໍ່ມີສິດເພີ່ມໂທດໃຫ້ຈຳເລີຍ ເວັ້ນເສຍແຕ່ມີຄຳສະເໜີຄັດຄ້ານຂອງຫົວໜ້າອົງການ ໄອຍະການຂັ້ນຕົ້ນ ແລະ ຫົວໜ້າອົງການໄອຍະການຂັ້ນອຸທອນເຫັນດີ ເທົ່ານັ້ນ (ມ 220 ວັກ2 ກດອ)

ພິພາກສາເປັນຂັ້ນອຸທອນ
(ມ 222 ກດອ)

- ພິພາກສາຢັ້ງຢືນຕາມສານຂັ້ນຕົ້ນ ຫຼື ປ່ຽນແປງ ແລ້ວພິພາກສາຄືນໃໝ່ ຫຼື ລົບລ້າງ ແລ້ວສົ່ງໄປໃຫ້ສານຂັ້ນຕົ້ນພິຈາລະນາຄືນໃໝ່ ຫຼື ລົບລ້າງຄຳຕັດສິນຂອງສານຂັ້ນຕົ້ນ ແລ້ວພິພາກສາໃຫ້ຈຳເລີຍພົ້ນ ຂໍ້ກ່າວຫາ (ມ 222 ວັກ1 ກດອ)

ຂໍລົບລ້າງ ຫຼື ສະເໜີຄັດຄ້ານ
(ມ 226 ກດອ)

- ມີສິດຂໍລົບລ້າງ ແລະ ຂໍສະເໜີຄັດຄ້ານຄຳສັ່ງ, ຄຳຊີ້ຂາດຂອງສານຂັ້ນອຸທອນພາຍໃນ ກຳນົດ **7** ວັນ ນັບແຕ່ວັນຮັບຊາບເປັນຕົ້ນໄປ. ສຳລັບຄຳພິພາກສາ ກຳນົດເວລາແມ່ນ **45** ວັນ ນັບແຕ່ວັນໄດ້ອ່ານ ຫຼື ວັນຮັບຊາບຄຳພິພາກສາເປັນຕົ້ນໄປ (ມ 226 ວັກ3 ກດອ)

ດຳເນີນຄະດີຢູ່ສານຂັ້ນລົບລ້າງ
(ມ 225 - 234 ກດອ)

- ຕ້ອງມີຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານ (ມ 226 ວັກ2 ກດອ). ໂດຍຜ່ານສານຂັ້ນອຸທອນ (ມ 227 ກດອ)
- ຕ້ອງພິຈາລະນາພິພາກສາຄະດີພາຍໃນກຳນົດ **30** ວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ (ມ 228 ກດອ)
- ປະທານຄະນະສານ ຫຼື ຄະນະສານຜູ້ຮັບຜິດຊອບຄະດີ ລາຍງານສະພາບຄະດີ, ລາຍງານກ່ຽວກັບຄຳສັ່ງ, ຄຳຊີ້ຂາດ ຫຼື ຄຳພິພາກສາ, ເນື້ອໃນຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານ ພ້ອມດ້ວຍຄຳເຫັນຂອງຕົນ (ມ 229 ວັກ3 ກດອ)
- ຄະນະສານຜູ້ອື່ນ, ຫົວໜ້າອົງການໄອຍະການ ມີສິດຖາມຜູ້ຮັບຜິດຊອບລາຍງານຄະດີ (ມ 229 ວັກ3 ກດອ)
- ຫົວໜ້າອົງການໄອຍະການຖະແຫຼງແລ້ວ ປະທານຄະນະສານກ່າວປິດປະຊຸມສານຊົ່ວຄາວ ເພື່ອພິຈາລະນາພິພາກສາຄະດີ ໃນຫ້ອງປະຊຸມລັບແລ້ວນຳເອົາຄຳພິພາກສາອອກມາອ່ານຕໍ່ທີ່ປະຊຸມສານ (ມ 229 ວັກທ້າຍ ກດອ)
- ພິຈາລະນາກວດກາຄວາມຖືກຕ້ອງທາງດ້ານກົດໝາຍເທົ່ານັ້ນ ແລະ ຈະບໍ່ໄດ້ທຳການໄຕ່ສວນກ່ຽວກັບເຫດການ ຕ່າງໆ ຂອງຄະດີນັ້ນອີກ (ມ 233 ກດອ)

ພິພາກສາເປັນຂັ້ນລົບລ້າງ
(ມ 231 ກດອ)

-ພິພາກສາບໍ່ຮັບເອົາຄຳຮ້ອງຂໍລົບລ້າງ ຫຼື ສະເໜີຄັດຄ້ານມາພິຈາລະນາ ຫຼື ພິພາກສາຍົກເລີກຄຳຮ້ອງຂໍລົບລ້າງ ຫຼື ສະເໜີຄັດຄ້ານແລ້ວພິພາກສາຢັ້ງຢືນຕາມສານຂັ້ນອຸທອນ ຫຼື ລົບລ້າງຄຳພິພາກສາສານຂັ້ນອຸທອນແລ້ວໃຫ້ຈຳເລີຍຜົ້ນຂໍ້ກ່າວຫາ ຫຼື ພິພາກສາປ່ຽນແປງຄຳພິພາກສາຂອງສານຂັ້ນອຸທອນທາງດ້ານກົດໝາຍທັງໝົດ ຫຼື ບາງສ່ວນ ຫຼື ພິພາກສາລົບລ້າງຄຳພິພາກສາສານຂັ້ນອຸທອນທັງໝົດ ຫຼື ບາງສ່ວນແລ້ວສົ່ງຄະດີໃຫ້ສານຂັ້ນອຸທອນຄະນະໃໝ່ ຫຼື ຄະນະເກົ່າພິຈາລະນາຄືນໃໝ່ (ມ 231 ກດອ)

ແຜນວາດການເຂົ້າຮ່ວມຂອງທະນາຍຄວາມໃນການດຳເນີນຄະດີອາຍາ

ການດຳເນີນຄະດີອາຍາໃນຂັ້ນຕອນຂອງເຈົ້າໜ້າທີ່ສືບສວນ-ສອບສວນ

ການເຂົ້າຮ່ວມຂອງທະນາຍຄວາມກ່ອນອອກຄຳສັ່ງເປີດການ ສສ-ສສ (ມ 71 ວັກ1-3 ກດອ, 19 ກທຄ)

- ເຂົ້າຮ່ວມໃນການດຳເນີນຄະດີອາຍາ ນັບແຕ່ວັນໄດ້ຮັບການມອບສິດ ຫຼື ການສະເໜີຢ່າງເປັນລາຍລັກອັກສອນ ຂອງລູກຄວາມ ຫຼື ສະມາຊິກຄອບຄົວ ຫຼື ອົງການຈັດຕັ້ງຂອງຜູ່ກ່ຽວ (ມ 71 ວັກ2 ກດອ, ມ 19 ກທຄ)
- ມີສິດຕາງໜ້າຜູ້ຖືກສົງໃສໃນການຕໍ່ສູ້ຄະດີ ເພື່ອຊ່ວຍເຫຼືອທາງດ້ານກົດໝາຍ (ມ 14 ວັກ1 ກດອ)
- ມີສິດພົບກັບຜູ້ຖືກສົງໄສ ຕາມການສະເໜີຂອງຜູ້ກ່ຽວ ພາຍຫຼັງທີ່ຖືກກັກຕົວ ຫຼື ຈັບຕົວ ກໍລະນີເຊິ່ງໜ້າ (ມ 71 ວັກ3 ຂໍ້1 ກດອ, ແລະ ມ 20 ຂໍ້1 ກທຄ)
- ສະເໜີປະກັນຕົວ ຜູ້ຖືກສົງໄສ (ລູກຄວາມ) (ມ 64 ວັກ2 ຂໍ້6 ກດຍ, ມ 71 ວັກ3 ຂໍ້9 ກດອ, ມ 20 ຂໍ້9 ກທຄ)

ການເຂົ້າຮ່ວມພາຍຫຼັງອອກຄຳສັ່ງເປີດການ ສສ-ສສ (ມ 71 ວັກ1-3 ກດຍ, ມ19 ກທຄ)

- ຮັບການມອບສິດ ຫຼື ແຕ່ງຕັ້ງ ເປັນທະນາຍຄວາມ (ມ53 ວັກ1 ຂໍ້7, ມ 71 ວັກ3 ຂໍ້11 ກດອ, ມ 20 ຂໍ້12 ກທຄ)
- ມີສິດຕາງໜ້າຜູ້ຖືກຫາໃນການຕໍ່ສູ້ຄະດີ ເພື່ອຊ່ວຍເຫຼືອທາງດ້ານກົດໝາຍ (ມ 14 ວັກ1 ກດອ)
- ພົບກັບຜູ້ທີ່ຈະເປັນລູກຄວາມ ຫຼື ລູກຄວາມຕາມການສະເໜີຂອງຜູ້ກ່ຽວພາຍຫຼັງທີ່ຖືກຈັບຕົວ ຫຼື ຖືກກັກຂັງ (ມ 71 ວັກ3 ຂໍ້1 ກດອ, ມ 20 ຂໍ້1 ກທຄ)
- ຮັບໝາຍຮຽກໃຫ້ລູກຄວາມຂອງຕົນ (ມ 71 ວັກ3 ຂໍ້12 ກດອ, ມ 20 ຂໍ້11 ກທຄ)
- ຮັບຊາບການແຈ້ງສິດ ແລະ ພັນທະຂອງຕົນ ກ່ອນເອົາຄຳໃຫ້ການຂອງລູກຄວາມຕົນ (ມ 116 ວັກ2, ມ 139 ວັກ5 ກດອ)
- ຮັບຊາບຂໍ້ກ່າວຫາໃສ່ລູກຄວາມ ແລະ ເຂົ້າຮ່ວມຮັບຟັງການເອົາຄຳໃຫ້ການຂອງລູກຄວາມຕົນ (ມ 71 ວັກ3 ຂໍ້2 ກດຍ, ມ 20 ຂໍ້2 ກທຄ)
- ສະເໜີຫຼັກຖານ ແລະ ພະຍານ (ມ 71 ວັກ3 ຂໍ້4 ກດອ, ມ 20 ຂໍ້4 ກທຄ)
- ສະເໜີປະກັນຕົວ,ການປ່ອຍຕົວພາງ ແລະ ການຍື່ນຄຳຮ້ອງຂໍອື່ນໆ (ມ 71 ວັກ3 ຂໍ້9 ກດອ, ມ 20 ຂໍ້9 ກທຄ, ມ 65 ວັກ2 ຂໍ້4 ກດຍ)
- ສະເໜີຄ້ານຕົວ ເຈົ້າໜ້າທີ່ ສສ-ສສ, ຜູ້ຊ່ຽວຊານ, ຜູ້ຊຳນານງານ ຫຼື ຜູ້ແປພາສາ (ມ 71 ວັກ3 ຂໍ້5 ກດອ, ມ 20 ຂໍ້5 ກທຄ)
- ຄັດຄ້ານ ຫຼື ຮ້ອງທຸກຕໍ່ການກະທຳທີ່ບໍ່ຖືກຕ້ອງ ຫຼື ບໍ່ເໝາະສົມຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງ (ມ 71 ວັກ3 ຂໍ້7 ກດອ, ມ 20 ຂໍ້7 ກທຄ)
- ຂໍອຸທອນ, ຂໍລົບລ້າງຄຳສັ່ງຂອງຫົວໜ້າອົງການ ສສ-ສສ ແລະ ຫົວໜ້າອົງການໄອຍະການ (ມ 71 ວັກ3 ຂໍ້8 ກດອ, ມ 20 ຂໍ້8 ກທຄ)
- ເບິ່ງເອກະສານຢູ່ໃນສຳນວນຄະດີ, ສຳເນົາ ຫຼື ກ່າຍເອົາເນື້ອໃນເອກະສານ (ມ 71 ວັກ3 ຂໍ້3 ກດອ, ມ 20 ຂໍ້3 ກທຄ)

ການດຳເນີນຄະດີອາຍາໃນຂັ້ນຕອນຂອງໄອຍະການ

ການເຂົ້າຮ່ວມຂອງທະນາຍຄວາມໃນຂັ້ນຕອນຂອງໄອຍະການ

- ຮັບການມອບສິດ ຫຼື ແຕ່ງຕັ້ງເປັນທະນາຍຄວາມໃນກໍລະນີການກະທຳຜິດທີ່ກົດໝາຍໄດ້ກຳນົດໂທດປະຫານຊີວິດ ແລະ ການກະທຳຜິດອື່ນ (ມ 71 ວັກ3 ຂໍ້11 ກດອ, ມ 20 ຂໍ້ 12 ກທຄ)
- ມີສິດຕາງໜ້າຜູ້ຖືກຫາໃນການຕໍ່ສູ້ຄະດີ ເພື່ອຊ່ວຍເຫຼືອທາງດ້ານກົດໝາຍ (ມ 14 ວັກ1 ກດອ)
- ຮັບໝາຍຮຽກໃຫ້ລູກຄວາມຂອງຕົນ (ມ 71 ວັກ3 ຂໍ້12 ກດອ, ມ 20 ຂໍ້11 ກທຄ)
- ພົບກັບຜູ້ທີ່ຈະເປັນລູກຄວາມ ຫຼື ລູກຄວາມຕາມການສະເໜີຂອງຜູ້ກ່ຽວພາຍຫຼັງທີ່ຖືກຈັບຕົວ ຫຼື ຖືກຂັງ (ມ 71 ວັກ3 ຂໍ້1 ກດອ, ມ 20 ຂໍ້1 ກທຄ)
- ສະເໜີຫຼັກຖານ ແລະ ພະຍານ (ມ 71 ວັກ3 ຂໍ້4 ກດອ, ມ 20 ຂໍ້4 ກທຄ)
- ສະເໜີປະກັນຕົວ ການປ່ອຍຕົວພາງ ແລະ ຍື່ນຄຳຮ້ອງຂໍອື່ນໆຂອງລູກຄວາມຕົນ (ມ 71 ວັກ3 ຂໍ້9 ກດອ, ມ 20 ຂໍ້9 ກທຄ, ມ 65 ວັກ2 ຂໍ້4 ກດຍ)
- ໃຫ້ການຮ່ວມມືໃນການນຳຕົວລູກຄວາມຂອງຕົນ ທີ່ຖືກປ່ອຍຕົວພາງເຂົ້າມາອີງການໄອຍະການ (ມ 71 ວັກ3 ຂໍ້10 ກດອ, ມ 20 ຂໍ້10 ກທຄ)
- ສະເໜີຄ້ານຕົວພະນັກງານໄອຍະການ, ຜູ້ຊ່ຽວຊານ, ຜູ້ຊຳນານງານ ຫຼື ຜູ້ແປພາສາ (ມ 71 ວັກ3 ຂໍ້5 ກດອ, ມ 20 ຂໍ້5 ກທຄ)
- ຄັດຄ້ານ ຫຼື ຮ້ອງທຸກຕໍ່ການກະທຳທີ່ບໍ່ຖືກຕ້ອງ ຫຼື ບໍ່ເໝາະສົມຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງ (ມ 71 ວັກ3 ຂໍ້7 ກດອ, ມ 20 ຂໍ້7 ກທຄ)
- ຮັບຊາບຄຳສັ່ງຟ້ອງໃສ່ລູກຄວາມຕົນ ແລະ ເຊັນຮັບຮູ້ກ່ອນສົ່ງສຳນວນຄະດີໃຫ້ສານພາຍໃນ 3 ວັນລັດຖະການ (ມ 154 ວັກ3 ກດອ)
- ຂໍອຸທອນ, ຂໍລົບລ້າງຄຳສັ່ງຂອງຫົວໜ້າອົງການໄອຍະການ (ມ 71 ວັກ3 ຂໍ້8 ກດອ, ມ 20 ຂໍ້8 ກທຄ)
- ມີສິດອ່ານ ແລະ ຈົດກ່າຍ ຫຼື ອັດສຳເນົາເບິ່ງເອກະສານຢູ່ໃນສຳນວນຄະດີ, ສຳເນົາ ຫຼື ກ່າຍເອົາເນື້ອໃນເອກະສານ ແລະ ສຳເນົາເອົາເນື້ອໃນຄຳຖະແຫຼງ (ມ 71 ວັກ3 ຂໍ້3 ກດອ, ມ 156 ວັກ2 ກດອ, ມ 20 ຂໍ້3 ກທຄ)

ການດຳເນີນຄະດີອາຍາໃນຂັ້ນຕອນຂອງສານ

ການເຂົ້າຮ່ວມຂອງທະນາຍຄວາມໃນຂັ້ນຕອນຂອງສານ

ເຂົ້າຮ່ວມກ່ອນເປີດປະຊຸມສານ

- ຮັບການມອບສິດ ຫຼື ແຕ່ງຕັ້ງເປັນທະນາຍຄວາມ ໃນກໍລະນີການກະທຳຜິດທີ່ກົດໝາຍໄດ້ກຳນົດໂທດປະຫານຊີວິດ ແລະ ການກະທຳຜິດອື່ນ (ມ 71 ວັກ 3 ຂໍ້ 11 ກດອ, ມ 20 ຂໍ້ 12 ກທຄ)
- ມີສິດຕາງໜ້າຈຳເລີຍໃນການຕໍ່ສູ້ຄະດີ ເພື່ອຊ່ວຍເຫຼືອທາງດ້ານກົດໝາຍ (ມ 14 ວັກ1 ກດອ)
- ຮັບໝາຍຮຽກໃຫ້ລູກຄວາມຂອງຕົນ (ມ 71 ວັກ3 ຂໍ້12 ກດອ, ມ 20 ຂໍ້11 ກທຄ)
- ພົບກັບຜູ້ທີ່ຈະເປັນລູກຄວາມ ຫຼື ລູກຄວາມຕາມການສະເໜີຂອງຜູ້ກ່ຽວພາຍຫຼັງທີ່ຖືກຈັບຕົວ ຫຼື ຖືກກັກຂັງ (ມ 71 ວັກ3 ຂໍ້1 ກດອ, ມ 20 ຂໍ້1 ກທຄ)
- ມີສິດສະເໜີຫຼັກຖານ ແລະ ພະຍານ (ມ 71 ວັກ3 ຂໍ້4 ກດອ, ມ 20 ຂໍ້4 ກທຄ)
- ສະເໜີປະກັນຕົວ ການປ່ອຍຕົວພາງ ລູກຄວາມຕົນ (ມ 71 ວັກ3 ຂໍ້9, ມ 20 ຂໍ້9 ກທຄ)
- ໃຫ້ການຮ່ວມມືໃນການນຳຕົວລູກຄວາມຂອງຕົນ ທີ່ຖືກປ່ອຍຕົວພາງເຂົ້າມາສານ (ມ 71 ວັກ3 ຂໍ້10 ກດອ, ມ 20 ຂໍ້10 ກທຄ)
- ສະເໜີຄ້ານຕົວຜູ້ພິພາກສາ, ຜູ້ຊ່ຽວຊານ, ຜູ້ຊຳນານງານ ຫຼື ຜູ້ແປພາສາ (ມ 71 ວັກ3 ຂໍ້5 ກດອ, ມ 20 ຂໍ້5 ກທຄ)
- ມີສິດອ່ານ ແລະ ຈົດກ່າຍ ຫຼື ອັດສຳເນົາເບິ່ງເອກະສານຢູ່ໃນສຳນວນຄະດີ, ສຳເນົາ ຫຼື ກ່າຍເອົາເນື້ອໃນເອກະສານ ແລະ ສຳເນົາເອົາເນື້ອໃນຄຳຖະແຫຼງ (ມ 71 ວັກ3 ຂໍ້3 ກດອ, ມ 156 ວັກ2 ກດອ, ມ 20 ຂໍ້3 ກທຄ)
- ສິ່ງຄຳຖະແຫຼງຂອງຕົນເປັນລາຍລັກອັກສອນໃຫ້ສານກ່ອນວັນເປີດປະຊຸມສານ (ມ 178 ວັກ1 ກດອ)

ການດຳເນີນຄະດີອາຍາໃນຂັ້ນຕອນຂອງສານ

ເຂົ້າຮ່ວມໃນທີ່ປະຊຸມສານ

- ມີສິດຕາງໜ້າຈຳເລີຍໃນການຕໍ່ສູ້ຄະດີ ເພື່ອຊ່ວຍເຫຼືອທາງດ້ານກົດໝາຍ (ມ 14 ວັກ1 ກດອ)
- ໃຫ້ການຮ່ວມມືໃນການນຳລູກຄວາມຂອງຕົນທີ່ຖືກປ່ອຍຕົວພາງເຂົ້າມາໃນທີ່ປະຊຸມສານ (ມ 71 ວັກ3 ຂໍ້10 ກດອ, ມ 20 ຂໍ້10 ກທຄ)
- ສະເໜີຄ້ານຕົວຄະນະສານ, ຈ່າສານ, ຫົວໜ້າອົງການໄອຍະການ ຫຼື ຜູ້ຕາງໜ້າຫົວໜ້າອົງການໄອຍະການ, ຜູ້ຊ່ຽວຊານ, ຜູ້ຊຳນານງານ ຫຼື ຜູ້ແປພາສາ (ມ 71 ວັກ3 ຂໍ້5, ມ 188 ວັກ1 ກດອ, ມ 20 ຂໍ້5 ກທຄ)
- ມີສິດໃຫ້ການໃນທີ່ປະຊຸມສານ (ມ 92 ວັກ5 ກດອ)
- ສະເໜີຫຼັກຖານ ແລະ ພະຍານ (ມ 71 ວັກ3 ຂໍ້4 ກດອ, ມ 20 ຂໍ້4 ກທຄ)
- ມີສິດຖາມ ແລະ ສະເໜີບັນຫາກ່ຽວກັບສະພາບການພົວພັນກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງລູກຄວາມຕົນໃນເວລາໄຕ່ສວນຄະດີ (ມ 195 ວັກ5 ກດອ)
- ໃຫ້ຄຳເຫັນ, ສອບຖາມຜູ້ເຂົ້າຮ່ວມອື່ນ ໃນເວລາໄຕ່ສວນຄະດີໃນທີ່ປະຊຸມສານ (ມ 71 ວັກ3 ຂໍ້6 ກດອ, ມ 20 ຂໍ້6 ກທຄ)
- ສະເໜີຄຳເຫັນຂອງຕົນກ່ຽວກັບຫຼັກຖານທາງດ້ານວັດຖຸ (ຖ້າມີການສະແດງຫຼັກຖານໃນເວລາໄຕ່ສວນຄະດີ) (ມ 199 ກດອ)
- ສະເໜີຄຳເຫັນຂອງຕົນເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງລູກຄວາມຕົນ ໃນເວລາໂຕ້ຖຽງ (ມ 201 ວັກ4 ກດອ)
- ໃຫ້ຄຳເຫັນກ່ຽວກັບຂໍ້ກ່າວຫາ (ມ 202 ວັກ1 ກດອ)
- ຂໍອຸທອນ, ຂໍລົບລ້າງຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານປະຊາຊົນ (ມ 71 ວັກ3 ຂໍ້8 ກດອ, (ມ 20 ຂໍ້8 ກທຄ)
- ມີສິດຂໍອຸທອນ ຄຳຕົກລົງຂອງສານ (ມ 212 ວັກ1 ກດອ)

ແຜນວາດການເຂົ້າຮ່ວມຂອງຜູ້ຖືກສົງໄສ ໃນການດຳເນີນຄະດີອາຍາ



ແຜນວາດການເຂົ້າຮ່ວມຂອງຜູ້ຖືກຫາ ໃນການດຳເນີນຄະດີອາຍາ

ກໍລະນີອົງການ ສສ-ສສ ດຳເນີນ ອອກຄຳສັ່ງເປີດການ ສສ-ສສ (ມ 53 ວັກ1 ຂໍ້4 ແລະ ມ 91 ກດອ)

ກໍລະນີອົງການໄອຍະການດຳເນີນ ອອກຄຳສັ່ງເປີດການ ສສ-ສສ (ມ 56 ວັກ1 ຂໍ້3 ແລະ ມ 91 ກດອ)

- ຮັບຊາບ ແລະ ແກ້ຂໍ້ກ່າວຫາ (ມ 65 ວັກ2 ຂໍ້1 ກດອ)
- ໄດ້ຮັບການອະທິບາຍ ກ່ຽວກັບສິດ ແລະ ພັນທະຂອງຕົນໃນການຕໍ່ສູ້ຄະດີ (ມ 65 ວັກ2 ຂໍ້2 ກດອ)
- ໃຫ້ການ ແລະ ສະເໜີຫຼັກຖານ (ມ 65 ວັກ2 ຂໍ້3 ກດອ)
- ສະເໜີປະກັນຕົວ ແລະ ຍື່ນຄຳຮ້ອງຂໍອື່ນ (ມ 65 ວັກ2 ຂໍ້4 ກດອ)
- ໄດ້ຮັບເອກະສານ ກ່ຽວກັບການເປີດການສສ-ສສ, ບົດບັນທຶກຄຳໃຫ້ການຂອງຕົນ, ຄຳສັ່ງກ່ຽວກັບການນຳໃຊ້, ປ່ຽນແປງ ຫຼື ລົບລ້າງ ມາດຕະການສະກັດກັ້ນ, ຄຳສັ່ງໂຈະ, ບົດສະຫຼຸບຜົນຂອງການ ສສ-ສສ , ຄຳສັ່ງຟ້ອງ ແລະ ຄຳຖະແຫຼງ ຂອງ ຫົວໜ້າອົງການໄອຍະການ, ຄຳສັ່ງຊັດມ້ຽນ, ເອກະສານ ແລະ ຄຳສັ່ງອື່ນ ກ່ຽວກັບການດຳເນີນຄະດີ ທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ (ມ 65 ວັກ2 ຂໍ້5 ກດອ)
- ເບິ່ງເອກະສານຢູ່ໃນສຳນວນຄະດີ, ສຳເນົາ ຫຼື ກ່າຍເອົາເນື້ອໃນເອກະສານ (ມ 65 ວັກ2 ຂໍ້6 ກດອ)
- ເອົາ ແລະ ພົບທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ໃນການຕໍ່ສູ້ຄະດີ (ມ 65 ວັກ2 ຂໍ້7 ກດອ)
- ສະເໜີຄ້ານຕົວ ຜູ້ດຳເນີນຄະດີອາຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 52 ຂໍ້1 ແລະ ຂໍ້2 ຂອງກົດໝາຍສະບັບນີ້, ຜູ້ຊ່ຽວຊານ, ຜູ້ຊຳນານງານ ຫຼື ຜູ້ແປພາສາ (ມ 65 ວັກ2 ຂໍ້8 ກດອ)
- ຮ້ອງຟ້ອງຕໍ່ການກະທຳ ຫຼື ການອອກຄຳສັ່ງ ຂອງຫົວໜ້າອົງການ ສສ-ສສ, ເຈົ້າໜ້າທີ່ ສສ-ສສ, ຫົວໜ້າອົງການໄອຍະການ ຫຼື ພະນັກງານໄອຍະການ ທີ່ເຫັນວ່າບໍ່ຖືກຕ້ອງ (ມ 65 ວັກ2 ຂໍ້9 ກດອ)
- ຂໍອຸທອນ, ຂໍລົບລ້າງ ຄຳສັ່ງຂອງຫົວໜ້າອົງການ ສສ-ສສ, ຫົວໜ້າອົງການໄອຍະການຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ສະບັບນີ້ (ມ 65 ວັກ2 ຂໍ້10 ກດອ)

ສະຫຼຸບການ ສສ-ສສ ສົ່ງອົງການໄອ ຍະການ (ມ 150 ກດອ)

ໂຈະການ ສສ-ສສ (ມ 146 ກດອ) ຫຼື ຊັດມ້ຽນຄະດີ (ມ 148 ກດອ)

ຄົ້ນຄວ້າສະຫຼຸບສຳນວນຄະດີ (ມ 37 ຂໍ້1 ກອຍ)

ແຜນວາດການເຂົ້າຮ່ວມຂອງຈຳເລີຍ ໃນການດຳເນີນຄະດີອາຍາ

ສານຂັ້ນຕົ້ນ
(ມ 164 ກດອ)

- ຮັບຊາບຄຳສັ່ງຟ້ອງ ແລະ ແກ້ຂໍ້ກ່າວຫາ (ມ 66 ວັກ2 ຂໍ້1 ກດອ)
- ໄດ້ຮັບການອະທິບາຍ ກ່ຽວກັບສິດ ແລະ ພັນທະຂອງຕົນໃນການຕໍ່ສູ້ຄະດີ (ມ 66 ວັກ2 ຂໍ້2 ກດອ)
- ເອົາ ແລະ ພົບທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ໃນການຕໍ່ສູ້ຄະດີ (ມ 66 ວັກ2 ຂໍ້3 ກດອ)
- ໃຫ້ການ, ແກ້ຂໍ້ກ່າວຫາ ແລະ ສະເໜີຫຼັກຖານ (ມ 66 ວັກ2 ຂໍ້4 ກດອ)
- ຊີ້ແຈງ ແລະ ຕອບຄຳຖາມໃນທີ່ປະຊຸມສານ (ມ 66 ວັກ2 ຂໍ້5 ກດອ)
- ເບິ່ງເອກະສານຢູ່ໃນສຳນວນຄະດີ, ສຳເນົາ ຫຼື ກ່າຍເອົາເນື້ອໃນເອກະສານ, ຍື່ນຄຳຮ້ອງຂໍ (ມ 66 ວັກ2 ຂໍ້6 ກດອ)
- ເຂົ້າຮ່ວມໃນທີ່ປະຊຸມສານ (ມ 66 ວັກ2 ຂໍ້7 ກດອ)
- ສະເໜີຄ້ານຕົວ ຜູ້ດຳເນີນຄະດີອາຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 52 ຂໍ້2 ແລະ ຂໍ້3 ຂອງກົດໝາຍສະບັບນີ້, ຜູ້ຊ່ຽວຊານ , ຜູ້ຊຳນານງານ ຫຼື ຜູ້ແປພາສາ (ມ 66 ວັກ2 ຂໍ້8 ກດອ)
- ໃຫ້ຄຳເຫັນ ກ່ຽວກັບການໂຕ້ຖຽງ ແລະ ໃຫ້ຄຳເຫັນ ເປັນຜູ້ສຸດທ້າຍ ໃນທີ່ປະຊຸມສານ (ມ 66 ວັກ2 ຂໍ້9 ກດອ)
- ໄດ້ຮັບຄຳຕົກລົງຂອງສານ (ມ 66 ວັກ2 ຂໍ້10 ກດອ)
- ຂໍອຸທອນ ຫຼື ຂໍລົບລ້າງ ຄຳຕົກລົງຂອງສານ (ມ 66 ວັກ2 ຂໍ້11 ກດອ)
- ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ (ມ 66 ວັກ2 ຂໍ້12 ກດອ)

ສານຂັ້ນອຸທອນ
(ມ 211 - 224 ກດອ)

ຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ (ມ 235 - 237 ກດອ)

1. ມີສິດຂໍອຸທອນ ຄຳສັ່ງ, ຄຳຊີ້ຂາດ ຂອງສານຂັ້ນຕົ້ນພາຍໃນກຳນົດ **7** ວັນ ນັບແຕ່ວັນຮັບຊາບເປັນຕົ້ນໄປ, ສຳລັບຄຳຕັດສິນກຳນົດເວລາ **20** ວັນ ນັບແຕ່ວັນໄດ້ອ່ານ ຫຼື ຮັບຊາບຄຳຕັດສິນເປັນຕົ້ນໄປ (ມ 214 ວັກ2 ກດອ)

ສານຂັ້ນລິບລ້າງ
(ມ 225 - 234 ກດອ)

ມີສິດຂໍລິບລ້າງ ຄຳສັ່ງ, ຄຳຊີ້ຂາດຂອງສານຂັ້ນອຸທອນພາຍໃນກຳນົດ **7** ວັນ ນັບແຕ່ວັນໄດ້ຮັບຊາບເປັນຕົ້ນໄປ, ສຳລັບຄຳພິພາກສາກຳນົດເວລາ **45** ວັນ ນັບແຕ່ວັນໄດ້ອ່ານ ຫຼື ຮັບຊາບຄຳພິພາກສາເປັນຕົ້ນໄປ (ມ 226 ວັກ3 ກດອ)

ແຜນວາດການດຳເນີນຄະດີອາຍາຫົວນີ້
ໄດ້ຮັບການຊ່ວຍເຫຼືອທາງດ້ານວິຊາການ ແລະ ການພິມຈາກ
ອົງການຮ່ວມມືສາກົນປະເທດຍີ່ປຸ່ນ (ໄຈກາ) ປະຈຳ ສປປ ລາວ

ເພື່ອແຈກຢາຍ ຫ້າມ ຊື້ - ຂາຍ

ຈຳນວນ 10,000 ຫົວ

ທີ່ ໂຮງພິມ ເທບປັນຍາການພິມ, ນະຄອນຫຼວງວຽງຈັນ, ມີນາ 2022

ສະໜັບສະໜູນການຈັດພິມໂດຍ:

ອົງການຮ່ວມມືສາກົນຍີ່ປຸ່ນ (ໄຈກາ)
Supported by Japan International Cooperation Agency (JICA)
ໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍ
The Project for Promoting Development and Strengthening
of the Rule of Law (J-ROL)